# ພື້ນຖານ ສາສະໜາ ອິດສະລາມ

# أساس دين الاسلام

تأليف: منصور عبد الله

**ຂຽນໂດຍ: ມັນສູຣ ອັບດຸລລໍຫ໌**

ແປໂດຍ: ມູຮຳຫມັດນູຣ ອີໄລວີ

مراجعة: فريق اللغة لاو بموقع دار الإسلام

ຜູ້ກວດກາ: ທີມງານພາສາລາວ ເວັບໄຊດ໌ ອິສລາມມິກເຮົາສ໌

www.islamhouse.com

2021-1441

﴿بِسۡمِ ٱللَّهِ ٱلرَّحۡمَٰنِ ٱلرَّحِيمِ﴾

﴿ດ້ວຍພຣະນາມຂອງອັລລໍຫ໌ ຜູ້ຊົງເມດຕາ ປານີສະເໝີ﴾

## ພື້ນຖານ ສາສະໜາ ອິດສະລາມ

ການສັນລະເສີນທັ້ງຫຼາຍເປັນສິດຂອງອັລລໍຫ໌ ເຮົາຂໍສັນລະເສີນຕໍ່ພຣະອົງ ເຮົາຂໍຄວາມຊ່ວຍເຫຼືອຕໍ່ພຣະອົງ ເຮົາຂໍອະໄພຍະໂທດຕໍ່ພຣະອົງ ແລະເຮົາຂໍຄວາມຄູ້ມຄອງຕໍ່ພຣະອົງໃຫ້ຫຼຸດພົ້ນຈາກຄວາມຊົ່ວຮ້າຍຂອງຕົນເອງ ແລະຈາກຄວາມຜິດພາດທີ່ເກີດຈາກການງານທີ່ເຮົາໄດ້ກະທຳ ຜູ້ໃດກໍ່ຕາມທີ່ພຣະອົງສົງໃຫ້ທາງນຳແກ່ເຂົາກໍ່ບໍ່ມີຜູ້ໃດທີ່ເຮັດໃຫ້ລາວຫລົງທາງໄດ້ ແລະຜູ້ໃດທີ່ພຣະອົງໃຫ້ເຂົາຫລົງທາງກໍ່ບໍ່ມີໃຜສາມາດເຮັດໃຫ້ລາວໄດ້ຮັບທາງນຳ ເຮົາຂໍປະຕິຍານວ່າບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ພຽງອົງດຽວເທົ່ານັ້ນ ໂດຍບໍ່ມີພາຄີໃດໆຕໍ່ພຣະອົງ ແລະເຮົາຂໍປະຕິຍານວ່າແທ້ຈິງມຸຮຳຫມັດນັ້ນເປັນບ່າວແລະສາສະນະທູດຂອງພຣະອົງ ຂໍການສະດຸດີແຫ່ງອັລລໍຫ໌ແລະຄວາມສັນຕິສຸກປອດໄພຈົ່ງມີແດ່ທ່ານແລະບັນດາພີ່ນ້ອງ ຕະຫຼອດຮອດເສາະຫາບະຫ໌ຂອງທ່ານທຸກຄົນ ລວມເຖິງຜູ້ທີ່ຈະເລີນຮອຍຕາມພວກເຂົາດ້ວຍກັບຄວາມດີງາມ ຈົນຮອດມື້ແຫ່ງການຕັດສິນ

ໃນນາມຜູ້ຂຽນຮູ້ສຶກດີໃຈຫຼາຍທີ່ໄດ້ມີໂອກາດຂຽນໜັງສື "ຫຼັກພື້ນຖານສາສະໜາອິສລາມ" ເພື່ອເປັນຄວາມຮູ້ພື້ນຖານສຳຮັບຜູ້ທີ່ສົນໃຈສາສະໜາອິລາມ ຫຼືຜູ້ທີ່ເຂົ້າຮັບນັບຖືສາສະໜາອິສລາມໃຫມ່ ຫຼືພີ່ນ້ອງມຸສລິມທົ່ວໄປ

ສຸດທ້າຍນີ້ ຜູ້ຂຽນມີຄວາມຫວັງຢ່າງຍິ່ງວ່າ ໜັງສືເລັ່ມນີ້ຈະເປັນປະໂຫຍດ ແລະ ສາມາດເຮັດໃຫ້ພີ່ນ້ອງທີ່ໄດ້ອ່ານ ເຂົ້າໃຈຫຼັກຄຳສັ່ງສອນຂໍ້ປະຕິບັດສັ່ງໃຊ້ແລະຂໍ້ສັ່ງຫ້າມຂອງສາສະໜາອິສລາມໄດ້ຫຼາຍຂຶ້ນ

ابن صالح الإليوي

# ສາລະບັນ

**ຫົວຂໍ້ເລື່ອງ** **ເລກໜ້າ**

## ຫຼັກການພື້ນຖານອິສລາມ


1. ຄວາມໝາຍຂອງຄຳວ່າອິສລາມ ແລະ ມຸສລິມ 2
2. ໂຄງສ້າງຂອງສາສະໜາອິສລາມ 2
3. ຫຼັກປະຕິບັດ (ຣູກຸນອິສລາມ) 3
4. ຫຼັກສັດທາ (ຣູກຸນອິມານ) 4
5. ອິຫ໌ຊານ (ຫຼັກຄຸນນະທຳ) 4
6. ເຕົາຮີດ (ການສັດທາຕໍ່ເອກກະພາບຂອງອັລລໍຫ໌) 5
7. ຄຸນນະຫຼັກສະນະຂອງມະລາອິກະຫ໌(ເທວະທູດ) 11
8. ມະລາອິກະຫ໌ 10 ທ່ານ ແລະໜ້າທີ່ 12
9. ຄຸນນະລັກສະນະສຳຄັນສຳຫຼັບບັນດາຣໍສູລ 4 ປະການ 13
10. ຣໍສູລ 25 ທ່ານ 14
11. ອຸລຸລອັຊມີ (ຜູ້ມີຄວາມຕັ້ງໃຈເຂັ້ມແຂ່ງເດັດດ່ຽວ) 16
12. ປະຫວັດນາບີມຸຫັມມັດ (ຊັລລັລລໍຫຸອາລັຍຫິວະຊັລລັມ) ແລະເຫດການສຳຄັນໃນຊີວິດຂອງທ່ານນາບີ 16
13. ມັ່ວະຊີຍາດ ເຫດການປະຕິຫານໃນຊີວິດຂອງສາສະດາ ມຸຫັມມັດ (ຊັລລໍຫຯ) 17
14. ຄຳພີທີ່ອັລລໍຫ໌ປະທານໃຫ້ແກ່ບັນດານາບີທັ້ງຫຼາຍ 18
15. ພຣະຄຳພີອັລກຸຣອານ 19
16. ໜ້າທີ່ຂອງເຮົາຕໍ່ອັລກຸຣອານ 19

# ສາລະບັນຕໍ່ (1)

ຫົວຂໍ້ເລື່ອງ ເລກໜ້າ


| | |
|---|---|
| 17. ມາລະຍາດໃນການອ່ານອັລກຸຣອານ | 19 |
| 18. ວັນອາຄິເຣາະຫ໌(ວັນສິ້ນໂລກ) ສິ່ງທີ່ມະນຸດຕ້ອງພົບ | 20 |
| 19. ສັນຍານນ້ອຍກ່ອນວັນສິ້ນໂລກ | 21 |
| 20. ສິບສັນຍານໃຫຍ່ກ່ອນວັນສິ້ນໂລກ | 24 |
| 21. ກໍດໍ່ ກໍດັຣ (ຄວາມດີຄວາມຊົ່ວ) | 25 |
| 22. ຊື່ຂອງການລະຫມາດທັ້ງ 5 ເວລາ | 26 |
| 23. ນໍ້າສະອາດທັ້ງ 7 ຊະນິດ | 27 |
| 24. ນະຍິສ 3 ປະເພດ | 27 |
| 25. ຫະດັຊ | 28 |
| 26. ຟັຣດູ(ກົດ)ການເອົານໍ້າລະຫມາດ | 29 |
| 27. ຕະຍັມມຸມ | 30 |
| 28. ຄໍາກ່າວອະຊານແລະອິກໍມະຫ໌ | 31 |
| 29. ຣູກົນການນະມາຊ(ລະຫມາດ) | 32 |
| 30. ສິ່ງທີ່ເຮັດໃຫ້ເສຍການລະຫມາດ | 33 |
| 31. ລະຫມາດສຸນັດຕ່າງໆ | 34 |
| 32. ຊະກາດຄືແມ່ນຫຍັງ? ໃຜແດ່ທີ່ມີສິດໄດ້ຮັບ? | 36 |
| 33. ການຖືສິນອົດ (ບວດ) ແມ່ນຫຍັງ? | 37 |
| 34. ຫັຈ | 39 |

## ສາລະບັນຕໍ່ (2)

ຫົວຂໍ້ເລື່ອງ ເລກໜ້າ

### ພາກທີ່ສອງພື້ນຖານທົ່ວໄປ


35. ມັສຍິດທີ່ສຳຄັນທີ່ສຸດໃນອິສລາມ 43
36. ຫຸກົມ 5 ປະການທີ່ເປັນກົດໃນການຕັດສິນ 43
37. ຟັຣດູໄອນ ແລະຟັຣດູກິຟາຍະຫ໌ 43
38. ສິບສອງເດືອນ ອິສລາມ 44
39. ວັນສຳຄັນໃນສາສະໜາອິສລາມ 44
40. ສີຄໍລີຟະຫ໌ 45
41. ລູກຂອງທ່ານນາບີມຸຫັມມັດ(ຊັລລັລລໍຫຸ) 46
42. ພັນລະຍາຂອງທ່ານນາບີມຸຫັມມັດ(ຊັລລັລລໍຫຸ) 46
43. ສິບສໍຫາບະຫທີ່ໄດ້ຮັບສັນຍານວ່າເປັນຊາວສະຫວັນ 47
44. ມັຊຫັບ ແລະມັຊອິມາມທັ້ງສີ 48
45. ອິມາມນັກບັນທຶກຫະດິຊ 6 ທ່ານ 48
46. ຜູ້ຍິງທີ່ປະເສີດທີ່ສຸດ 4 ຄົນ 49
47. ກຸສົນຜົນລະບຸນຂອງຜູ້ຕາຍຊະຫີດ 7 ປະກາຍ 49
48. ເຈັດບຸກຄົນທີ່ຢູ່ໃຕ້ຮົ່ມເງົາບັນລັງຂອງອັລລໍຫ໌ 50
49. ການງານທີ່ຈະຊ່ວຍເຫຼືອມະນຸດໃນວັນກິຍາມະຫ໌ 51
50. 5 ປະການທີ່ມຸສລິມປະຕິບັດແລ້ວຈະໄດ້ຮັບຫາຍະນະ 52
51. ອິມານ 77 ຂະແໜງ 52
52. ສີ່ປະການ ຜູ້ຍິງທີ່ຄວນເລືອກເພື່ອການແຕ່ງງານ 56

## ສາລະບັນຕໍ່ (3)

ຫົວຂໍ້ເລື່ອງ ເລກໜ້າ


| | |
|---|---|
| 53. ສີ່ຄໍາຖາມ ໃນວັນກິຍາມະຫ໌ | 56 |
| 54. ສາມປະການ ທີ່ຜູ້ຕາຍຈະໄດ້ຮັບຜົນບະບຸນຕະຫຼອດ | 57 |
| 55. ຄວາມໝາຍຂອງການອິຈຈະເຣາະຫ 5 ປະການ | 57 |
| 56. ຈົ່ງຊ່ວງຊີງ 5 ຢ່າງກ່ອນ 5 ຢ່າງຈະມາເຖິງ | 58 |
| 57. ການປະພຶດທີ່ພາໄປສູ່ຄວາມພິນາດ | 58 |
| 58. ໜ້າທີ່ຜູ້ມີຊີວິດຕໍ່ສົບ(ຄົນຕາຍ) | 58 |
| 59. ຄຸນນະລັກສະນະພິເສດຂອງອິສລາມ | 59 |
| 60. ຄຸນນະລັກສະນະ 10 ປະການທີ່ມຸສລິມຕ້ອງມີ | 59 |


☾☆☾☆☾☆☾☆☾☆

# ພາກທີ່ໜຶ່ງ (1)

# ຫຼັກການພື້ນຖານອິສລາມ

## 1. ຄວາມໝາຍຂອງຄຳວ່າອິສລາມແລະມຸສລິມ

ເມື່ອເຮົາມີຄວາມເຊື່ອສັດທາຕໍ່ພຣະເຈົ້າ(ອັລລໍຫ໌)ແລ້ວ ແນ່ນອນ ເຮົາກໍ່ຢາກຈະຮູ້ຄວາມໝາຍວ່າອິສລາມຫຼື ມຸສລິມນັ້ນມີຄວາມໝາຍແນວໃດ

**ອິສລາມ** ຫຼື **ສາສະໜາອິສລາມ** ໝາຍເຖິງຜູ້ທີ່ສັດທານອບນ້ອມຍອມຕົນເອງວ່າອັລລໍຫ໌ນັ້ນເປັນພຣະເຈົ້າ ແລະເປັນຜູ້ສ້າງທຸກສັບພະສິ່ງໃນຈັກກະວານແລະໂລກນີ້ ແລະຍອມຮັບຕໍ່ການກຳໜົດຕ່າງໆຂອງພຣະອົງ ແລະພຣະປະຊົງຂອງອັລລໍຫ໌ ແລະເຊື່ອໝັ້ນຢ່າງແໜ່ວແນ່ວ່າບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ພຽງພຣະອົງດຽວ

**ມຸສລິມ** ໝາຍເຖິງ ຜູ້ທີ່ນັບຖືສາສະໜາອິສລາມ ປະຕິບັດຕົນຕາມກົດຂໍ້ບັງຄັບຂອງສາສະໜາອິສລາມດ້ວຍຄວາມຮັກຄວາມສະມັກຄີແລະຄວາມສັນຕິ ຍອມຮັບວ່າອັລລໍຫ໌ນັ້ນເປັນພຣະເຈົ້າ ແລະເປັນຜູ້ສ້າງທຸກສັບພະສິ່ງໃນຈັກກະວານແລະໂລກນີ້(ທັ້ງມະນຸດແລະສັດ) ແລະຍອມຮັບຕໍ່ການກຳໜົດຕ່າງໆຂອງພຣະອົງ ແລະພຣະປະຊົງຂອງອັລລໍຫ໌

## 2. ໂຄງສ້າງຂອງສາສະໜາອິສລາມ

ອາຄານບ້ານເຮືອນ ຍັງມີໂຄງສ້າງແນ່ນອນ ສາສະໜາອິສລາມເຮົາກໍ່ມີເຊັ່ນກັນ

ໂຄງສ້າງສາສະໜາອິສລາມມີ 3 ປະການ

- ຫຼັກປະຕິບັດ (ຣູກຸນອິສລາມ)
- ຫຼັກສັດທາ (ຣູກຸນອີມານ)
- ຫຼັກຄຸນນະທຳ (ອິຫ໌ຊານ)

## 3. ຫຼັກປະຕິບັດ (ຣຸກຸນອິສລາມ)

ໂຄງສ້າງທຳອິດ ຫຼັກປະຕິບັດ ຫຼື ທີ່ເຮົາເອີ້ນກັນວ່າ “**ຣຸກຸນອິສລາມ**” ມີ 5 ປະການ ດັ່ງນີ້!!

ວິທີການກ່າວປະຕິຍານຕົວວ່າ

"أَشْهَدُ أَنْ لَا إِلَهَ إِلَّا اللهُ وَ أَشْهَدُ أَنَّ مُحَمَّدًا رَسُولُ اللَّهِ"

“ອັຊຫະດຸອັນ ລາອິລາຫະ ອິລລັລລໍຫ ວະອັຊຫະດຸອັນນະ ມຸຫັມ ມັດດັຣຣໍຊູລຸລລໍຫ”

ຄວາມໝາຍວ່າ: “ຂ້າພະເຈົ້າຂໍປະຕິຍານຕົນວ່າ ແທ້ຈິງບໍ່ມີພຣະເຈົ້າອື່ນໃດນອກຈາກອັລລໍຫ໌ ແລະ ຂ້າພະເຈົ້າຂໍປະຕິຍານຕົນວ່າ ມຸຮໍາຫມັດເປັນສາສະນະທູດຂອງອັລລໍຫ໌”

ໃນຣຸກຸນອິສລາມ ຫຼືຫຼັກປະຕິບັດທັ້ງຫ້າປະການຂໍ້ສໍາຄັນທີ່ສຸດຄື

1. ການກ່າວປະຍານຕົນ (ກະລິມະຫ໌ອຊາຫະດະຫ໌) ຄືການຍອມຮັບເອົາອັລລໍຫ໌ ແລະທ່ານນະບີມຸຫັມມັດ (ຊັລລັລລໍ ຣຸອາໄລ ຮິວະຊັລລັມ) ເປັນທີ່ຍຶດໝັ້ນໃນຊີວິດ

2. ລະຫມາດມື້ລະ 5 ເວລາ
3. ຈ່າຍຊະກາດ
4. ຖືສິນອົດໃນເດືອນຣໍມະດອນ
5. ການເຮັດພິທີຫັຈ໌ ຫາກມີຄວາມສາມາດ

## 4. ຫຼັກສັດທາ (ຣູກຸນອີມານ)

ໂຄງສ້າງທີ່ສອງຄື ຫຼັກສັດທາຫຼືທີ່ເອີ້ນວ່າ “**ຣູກຸນອີມານ**” ມີ 6 ປະການ ດັ່ງນີ້!!

1. ສັດທາຕໍ່ອັລລໍຫ໌
2. ສັດທາຕໍ່ບັນດາມະລາອິກະຫ໌ (ເທວະດາ ຫຼື ເທວະທູດ)
3. ສັດທາຕໍ່ບັນດາພຣະຄໍາພີ
4. ສັດທາຕໍ່ບັນດາຣໍສູລ
5. ສັດທາຕໍ່ວັນອາຄີເຣາະຫ໌ (ວັນໂລກໜ້າ)
6. ສັດທາຕໍ່ກໍດໍ່ ກໍດັຣ (ຄວາມດີຄວາມຊົ່ວ)

## 5. ອິຫ໌ຊານ (ຫຼັກຄຸນນະທໍາ)

ໂຄງສ້າງທີ່ສາມ ຫຼັກຄຸນນະທໍາ ຫຼືທີ່ເຮົາເອີ້ນວ່າ “**ອິຫ໌ຊານ**” ໝາຍເຖິງ ການປະຕິບັດການດ້ວຍດີ ມີຈິດໃຈສະອາດບໍລິສຸດ ເພື່ອຫວັງຄວາມໂປດປານຈາກອັລລໍຫ໌ ດັ່ງທີ່ທ່ານນາບີ ມຸຮໍາຫມັດ ໄດ້ກ່າວໄວ້ວ່າ: “ອິຫ໌ຊານ” ນັ້ນໝາຍເຖິງ ການທີ່ທ່ານເຮັດອິບາດະຫ໌ (ປະຕິບັດຄວາມງາມຄວາມດີ) ຕໍ່ອັລລໍຫ໌ ປຽບດັ່ງວ່າທ່ານນັ່ນເຫັນພຶ້ະອົງອັລລໍຫ໌ ເຖິງວ່າທ່ານບໍ່ເຫັນພຣະອົງອັລລໍຫ໌ ແຕ່ວ່າພຣະອົງອັລລໍຫ໌ນັ້ນເຫັນທ່ານ

ຫຼັກຄຸນນະທໍາບາງປະການທີ່ຄວນນໍາມາປະຕິບັດ ມີດັ່ງນີ້

1. ຄວາມບໍລິສຸດໃຈເພື່ອອັລລໍຫ໌ (ອັລອິຄລາສ)
2. ຄວາມຍໍາເກງ(ຢ້ານ)ຕໍ່ອັລລໍຫ໌ (ອັດຕັກວາ)

3. ການເຊື່ອໝັ້ນຢ່າງແໜ່ວແນ່ຕໍ່ອັລລໍຫ໌ (ອັລຍະກີນ)
4. ການມອບໝາຍຕໍ່ອັລລໍຫ໌ (ອັດຕະວັກກຸລ)
5. ການມີຄວາມອົດທົນ (ອັສຊໍບັຣ)
6. ການສຳນຶກຜິດ (ອັດເຕົາບະຫ໌)
7. ການລຳລຶກວ່າອັລລໍຫ໌ເບິ່ງເຮົາຢູ່ (ອັລມຸຣໍກໍບະຫ໌)
8. ການໃຫ້ອະໃພຄົນອື່ນ (ອັລອັຟວັນ)
9. ການມີຄວາມຮັກຕໍ່ຜູ້ອື່ນ (ອັລມະວັດດະຫ໌)
10. ການມີຄວາມຫວັງໃນຄວາມເມຕາ (ອັຣເຣາະຈາ)

## 6. ເຕົາຮີດ (ການສັດທາຕໍ່ເອກກະພາບຂອງອັລລໍຫ໌)

ການໃຫ້ເອກກະພາບຕໍ່ພະອົງອັລລໍຫ໌ ຫຼື ສັດທາຕໍ່ພຣະອົງອັລລໍຫ໌ ອົງດຽວຫຼືທີ່ເອີ້ນວ່າ "ອະກີດະຫ໌ເຕົາຮີດ" ນັບວ່າເປັນຫົວໃຈຫຼັກ ຂອງສາສະໜາອິສລາມ ບັນດານັກສາສະໜາຜູ້ມີຄວາມຮູ້ໄດ້ແບ່ງ ເປັນ 3 ປະເພດ ດັ່ງນີ້

1. ເຕົາຮີດ ອັຣຣຸບູບິຍະຫ໌ [ تو حيد الربوبية ]

ຄວາມໝາຍຄື ການເຊື່ອໝັ້ນໃນການເປັນພຣະຜູ້ອະພິບານ ຜູ້ຊົງສ້າງ ຜູ້ຊົງບໍລິຫານ ກິດຈະການງານທັ້ງໝົດພຽງຜູ້ດຽວເທົ່ານັ້ນ

2. ເຕົາຮີດ ອັລອຸລູຫິຍະຫ໌ [ تو حيد الألهية ]

ຄວາມໝາຍຄື ການເຊື່ອໝັ້ນການເປັນພຣະເຈົ້າຂອງອັລລໍຫ໌ ຜູ້ຄວນແກ່ການເຄົາລົບພັກດີ ວິງວອນຂໍ ເຊື່ອຟັງ ແລະປະຕິບັດຕາມຜູ້ດຽວເທົ່ານັ້ນ

3. ເຕົາຮີດ ອັສມາ ວັສສີຟາດ [تو حيد الأسماء والصفات]

ຄວາມໝາຍຄື ການເຊື່ອໝັ້ນໃນພຣະນາມ 99 ຂອງພຣະອົງອັລລໍຫ໌ ແລະ ຄຸນນະລັກສະນະທີ່ສົມບູນຂອງພຣະອົງພຽງຜູ້ດຽວເທົ່ານັ້ນ

## 99 ພຣະນາມຂອງພຣະອົງອັລລໍຫ໌

ພຣະອົງອັລລໍຫ໌ ມີພຣະນາມອັນຊົງກຽດເຖິງ 99 ພຣະນາມ ແລະ ຫາກຜູ້ໃດກໍ່ຕາມສາມາດທ່ອງຈຳທັ້ງໝົດລາວຈະໄດ້ເຂົ້າສວນສະຫວັນ ໄດ້ແກ່..

| | | |
|---|---|---|
| 1. ອັຣເຣາະຫ໌ມານ | اَلرَّحْمَنِ | (ຜູ້ຊົງກະລຸນາປານີ) |
| 2. ອັຣເຣາະຫ໌ຫີມ | اَلرَّحِيْمِ | (ຜູ້ຊົງເມດຕາ) |
| 3. ອັລ-ມະລິກ | اَلْمَالِكُ | (ຜູ້ຊົງອະພິສິດ) |
| 4. ອັລ-ກຸດດູສ | اَلْقُدُّوسُ | (ຜູ້ຊົງບໍລິສຸດ) |
| 5. ອັສສະລາມ | اَلْسَّلَامُ | (ຜູ້ຊົງສັນຕິ) |
| 6. ອັລ-ມຸມິນ | اَلْمُؤْمِنُ | (ຜູ້ຊົງໃຫ້ຄວາມປອດໃພ) |
| 7. ອັລ-ມຸຫັຍມິນ | اَلْمُهَيْمِنُ | (ຜູ້ຊົງປົກປ້ອງ) |
| 8. ອັລ-ອະຊີຊ | اَلْعَزِيْزُ | (ຜູ້ຊົງກຽດແລະອຳນາດ) |
| 9. ອັລ-ຈັບບັຣ | اَلْجَبَّارُ | (ຜູ້ຊົງອານຸພາບ) |
| 10. ອັລ-ມຸຕະກັບບິຣ | اَلْمُتَكَبِّرُ | (ຜູ້ຊົງເປັນເຈົ້າແຫ່ງຄວາມເກັຍງໄກ) |
| 11. ອັລ-ຄໍລິກ | اَلْخَالِقُ | (ຜູ້ຊົງສ້າງ) |
| 12. ອັລ-ບາຣິ | اَلْبَارِئ | (ຜູ້ຊົງບັງເກີດ) |
| 13. ອັລ-ມຸເຊົາວິຣ | اَلْمُصَوِّرُ | (ຜູ້ຊົງອອກແບບ) |

| | | |
|---|---|---|
| 14. ອັລ-ກອຟຟັຣ | اَلْغَفَّارُ | (ຜູ້ຊົງໃຫ້ອະໄພຢ່າງຍິ່ງ) |
| 15. ອັລ-ເກາະຫ໌ຫາຣ | اَلْقَهَّارُ | (ຜູ້ຊົງພິຊິດຢ່າງເດັດຂາດ) |
| 16. ອັລ-ວະຫ໌ຫາບ | اَلْوَهَّابُ | (ຜູ້ຊົງປທານໃຫ້ຢ່າງຫຼວງຫຼາຍ) |
| 17. ອັຣຣໍຊາກ | اَلرَّزَّاقُ | (ຜູ້ຊົງປະທານປັດຈັຍຍັງຊີບ) |
| 18. ອັລ-ຟັດຕາຫ໌ | اَلْفَتَّاحُ | (ຜູ້ຊົງເປີດ) |
| 19. ອັລ-ອະລີມ | اَلْعَلِيمُ | (ຜູ້ຊົງຮອບຮູ້) |
| 20. ອັລ-ກໍບິດ | اَلْقَابِضُ | (ຜູ້ຊົງຄໍາຄວບຄຸ້ມທຸກສິ່ງ) |
| 21. ອັລ-ບາຊິກ | اَلْبَاسِطُ | (ຜູ້ຊົງເຜື່ອແຜ່) |
| 22. ອັລ-ຄໍຟິກ | اَلْخَافِضُ | (ຜູ້ຊົງລົດໃຫ້ຕ່ຳ) |
| 23. ອັຣຣໍເຟ໋ຍ | اَلرَّافِعُ | (ຜູ້ຊົງຍົກໃຫ້ສູງ) |
| 24. ອັລ-ມຸອິຊ | اَلْمُعِزِّ | (ຜູ້ຊົງໃຫ້ອໍານາດແລະກຽດ) |
| 25. ອັລ-ມຸຊິລ | اَلْمُذِلُ | (ຜູ້ຊົງໃຫ້ຕົກຕ່ຳ) |
| 26. ອັສຊະມຽະ | اَلسَّمِيْعُ | (ຜູ້ຊົງໄດ້ຍິນ) |
| 27. ອັລ-ບາສີຣ | اَلْبَصِيْرُ | (ຜູ້ຊົງເຫັນ) |
| 28. ອັລ-ຫະກັມ | اَلْحَكَمُ | (ຜູ້ຊົງຕັດສິນ) |
| 29. ອັລ-ອັດ | اَلْعَدْلُ | (ຜູ້ຊົງຢຸດຕິທໍາ) |
| 30. ອັລ-ລະຕີຟ | اَللَّطِيْفُ | (ຜູ້ຊົງເອົາໃຈໃສ່) |
| 31. ອັລ-ຄໍບີຣ | اَلْخَبِيْرُ | (ຜູ້ຊົງຕະນັກ) |
| 32. ອັລ-ຮະລີມ | اَلْحَلِيْمُ | (ຜູ້ຊົງສຸຂຸມ) |
| 33. ອັລ-ອະຊີມ | اَلْعَظِيْمُ | (ຜູ້ຊົງຍິ່ງໃຫຍ່) |

| | | |
|---|---|---|
| 34. ອັລ-ກໍຟູຣ | اَلْغَفُوْرُ | (ຜູ້ສົງໃຫ້ອະໄພ) |
| 35. ອັຊຊະກູຣ | اَلشَّكُوْر | (ຜູ້ສົງປະທານການຕອບແທນ) |
| 36. ອັລ-ອະລີ | اَلْعَلِيُّ | (ຜູ້ສົງສູງສົ່ງ) |
| 37. ອັລ-ກະບີຣ | اَلْكَبِيْرُ | (ຜູ້ສົງເກີຍງໄກ) |
| 38. ອັລ-ຫະຟີຊ | اَلْحَفِيْظُ | (ຜູ້ສົງພິທັກຮັກສາ) |
| 39. ອັລ-ມຸກີດ | اَلْمُقِيْتُ | (ຜູ້ສົງຄຸ້ມຄອງ) |
| 40. ອັລ-ຫະຊີບ | اَلْحَسِيْبُ | (ຜູ້ສົງຄຳນວນ) |
| 41. ອັລ-ຈາລີລ | اَلْجَلِيْلُ | (ຜູ້ສົງໂດ່ງດັງ) |
| 42. ອັລ-ກະຣີມ | اَلْكَرِيْمُ | (ຜູ້ສົງເອື້ອເຟື້ອເຜື່ອແຜ່) |
| 43. ອັຣເຣາະຫ໌ກີບ | اَلرَّقِيْبُ | (ຜູ້ສົງສັງເກດ) |
| 44. ອັລ-ມຸຈີບ | اَلْمُجِيْبُ | (ຜູ້ສົງຕອບສະນອງ) |
| 45. ອັລ-ວາຊີ່ຽະ | اَلْوَاسِع | (ຜູ້ສົງກວ້າງຂວາງ) |
| 46. ອັລ-ຫະກີມ | اَلْحَكِيْم | (ຜູ້ສົງວິດທະຍະຍານ) |
| 47. ອັລ-ວະດູດ | اَلْوَدُوْدُ | (ຜູ້ສົງຮັກສາຫ່ວງໃຍ) |
| 48. ອັລ-ມະຈີດ | اَلْمَجِيْدُ | (ຜູ້ສົງປະເສີດສຸດ) |
| 49. ອັລ-ບາອິຊ | اَلْبَاعِثُ | (ຜູ້ສົງໃຫ້ຟື້ນ) |
| 50. ອັຊຊະຫີດ | اَلشَّهِيْدُ | (ຜູ້ສົງເປັນພະຍານ) |
| 51. ອັລ-ຫັກ | اَلْحَقُّ | (ຜູ້ສົງສັດຈະ) |
| 52. ອັລ-ວະກີລ | اَلْوَاكِيْلُ | (ຜູ້ສົງໄດ້ຮັບມອບໝາຍ) |
| 53. ອັລ-ກໍວີ | اَلْقَوِيُّ | (ຜູ້ສົງພະລັງ) |

| | | |
|---|---|---|
| 54. ອັລ-ມະຕິນ | اَلْمَتِيْنُ | (ຜູ້ສິງໝັ້ນຄົງ) |
| 55. ອັລ-ວະລີ | اَلْوَالِيُّ | (ຜູ້ສິງປົກຄອງ) |
| 56. ອັລ-ຫະມີດ | اَلْحَمِيْدُ | (ຜູ້ສິງໄດ້ຮັບການສາລະເສີນ) |
| 57. ອັລ-ມູຫ໌ສີ | اَلْمُحْصِي | (ຜູ້ສິງຮອບຮູ້ຄວບຄຸ້ມທຸກສິ່ງ) |
| 58. ອັລ-ມຸບດິອຸ | اَلْمُبْدِئُ | (ຜູ້ສິງລິເລີ່ມ) |
| 59. ອັລ-ມຸອີດ | اَلْمُعِيْدُ | (ຜູ້ສິງໃຫ້ກັບຄືນສະພາບ) |
| 60. ອັລ-ມຸຫ໌ຍີ | اَلْمُحْيِي | (ຜູ້ສິງໃຫ້ມີຊີວິດ) |
| 61. ອັລ-ມຸມີດ | اَلْمُمِيْتُ | (ຜູ້ສິງໃຫ້ຕາຍ) |
| 62. ອັລ-ຫັຍ | اَلْحَيُّ | (ຜູ້ສິງເປັນ) |
| 63. ອັລ-ກອຍຢູມ | اَلْقَيُّوْمُ | (ຜູ້ສິງດຳລົງຢູ່) |
| 64. ອັລ-ວາຈິດ | اَلْوَاجِدُ | (ຜູ້ສິງປະສິບ) |
| 65. ອັລ-ມາຈິດ | اَلْمَاجِدُ | (ຜູ້ຊົງຮຸ່ງເຮືອງ) |
| 66. ອັລ-ວາຫິດ | اَلْوَاحِدُ | (ຜູ້ຊົງເປັນອົງດຽວ) |
| 67. ອັລ-ອະຫັດ | اَلْأَحَدُ | (ຜູ້ຊົງເອກາກະ) |
| 68. ອັຊເສາະມັດ | اَلصَّمَدُ | (ຜູ້ຊົງເປັນທີ່ພຶ່ງພາ) |
| 69. ອັລ-ກໍດິຣ | اَلْقَادِرُ | (ຜູ້ຊົງອະນຸພາບ) |
| 70. ອັລ-ມຸກຕະດິຣ | اَلْمُقْتَدِرُ | (ຜູ້ຊົງກຳໜົດ) |
| 71. ອັລ-ມຸກ໋ອດດິມ | اَلْمُقَدِّمُ | (ຜູ້ຊົງກ່ອນອື່ນທັ້ງໝົດ) |
| 72. ອັລ-ມຸອັກຄິຣ | اَلْمُؤَخِّرُ | (ຜູ້ຊົງສຸດທ້າຍ) |
| 73. ອັລ-ເອົາວັລ | اَلْأَوَّلُ | (ຜູ້ຊົງອົງທີໜຶ່ງ) |

74. ອັລ-ອາຄິຣ  اَلْآخِرُ  (ຜູ້ຊົງອົງທີສຸດທ້າຍ)

75. ອັຊຊໍຫິຣ  اَلظَّاهِرُ  (ຜູ້ຊົງປະກົດ)

76. ອັລ-ບາຕິນ  اَلْبَاطِنُ  (ຜູ້ສົງເລັ້ນລັບ)

77. ອັລ-ວາລີ  اَلْوَالِي  (ຜູ້ສົງຕໍ່ເນື່ອງ)

78. ອັລ-ມຸຕະອາລ  اَلْمُتَعَالُ  (ຜູ້ສົງສູງສົ່ງ)

79. ອັລ-ບັຣຣຸ  اَلْبَرُّ  (ຜູ້ຊົງຄຸນນະທຳ)

80. ອັດເຕົາວາບ  اَلتَّوَّابُ  (ຜູ້ຊົງອະໄພຍະໂທດ)

81. ອັລ-ມຸນຕະກິມ  اَلْمُنْتَقِمُ  (ຜູ້ຊົງລົງໂທດ)

82. ອັລ-ອະຟຸຟ  اَلْعَفُوُّ  (ຜູ້ຊົງໃຫ້ອະໄພ)

83. ອັຣຣໍອູຟ  اَلرَّءُوْفُ  (ຜູ້ຊົງເອື້ອເຟື້ອ)

84. ມາລິກິລມຸລກ مَالِكُ الْمُلْكِ (ຜູ້ຊົງເປັນນາຍຂອງກຳມະສິດທັ້ງໝົດ)

85. ຊຸລຈາລາລິວັລອິກຣອມ ذُواَلجَلاَلِ وَالإِكْرَام(ຜູ້ຊົງສູງເດັ່ນແລະມີກຽດ)

86. ອັລ-ມຸກຊິດ  اَلْمُقْسِطُ  (ຜູ້ຊົງທ່ຽງທຳ)

87. ອັລ-ຈາມິຣະ  اَلْجَامِعُ  (ຜູ້ຊົງຮວບຮວມ)

88. ອັລ-ກໍນີ  اَلْغَنِيُّ  (ຜູ້ຊົງພໍພຽງ)

89. ອັລ-ມຸກນີ  اَلْمُغْنِي  (ຜູ້ຊົງເຮັດໃຫ້ພໍພຽງ)

90. ອັລ-ມານິຣະ  اَلْمَانِعُ  (ຜູ້ຊົງຢັບຍັ້ງ)

91. ອັດດໍຣ  اَلضَّارُّ  (ຜູ້ຊົງເຮັດໃຫ້ລຳບາກ)

92. ອັລ-ນາຟິອຸ  اَلنَّافِعُ  (ຜູ້ຊົງໃຫ້ຄຸນ)

93. ອັນນູຣ  اَلنُّوْرُ  (ຜູ້ຊົງລັດສະໝີ)

| | | |
|---|---|---|
| 94. ອັລ-ຫາດີ | اَلْهَادِي | (ຜູ້ຊົງຊີ້ນຳ) |
| 95. ອັລ-ບະດີ | اَلْبَدِيْعُ | (ຜູ້ຊົງທຳອິດໃນການບັນດານ) |
| 96. ອັລ-ບາກີ | اَلْبَاقِيُّ | (ຜູ້ຊົງອະມາຕະ) |
| 97. ອັລ-ວາຣິສ | اَلْوَارِثُ | (ຜູ້ຊົງປົກຄອງດູແລທຸກສິ່ງ) |
| 98. ອັຣຣໍຊີດ | اَلرَّشِيْدُ | (ຜູ້ຊົງແນະນຳ) |
| 99. ອັຣສໍບູຣ | اَلصَّبُوْرُ | (ຜູ້ຊົງທົນທານ) |

## 7. ຄຸນນະຫຼັກສະນະຂອງມະລາອິກະຫ໌ (ເທວະທູດ)

ຫຼັກສັດທາອີກໜຶ່ງປະການຂອງມຸສລິມ ຄືການສັດທາຕໍ່ບັນດາມະລາອິກະຫ໌ (ເທວະທູດ) ເຊິ່ງມີຄຸນນະຫຼັກສະນະພິເສດ ດັ່ງນີ້

- ຖືກສ້າງມາຈາກແສງລັດສະໝີ
- ບໍ່ມີເພດ
- ບໍ່ກິນບໍ່ດື່ມ
- ບໍ່ລັບບໍ່ນອນ
- ບໍ່ມີພໍ່ ແມ່ ເມັຍ ແລະລູກ
- ສາມາດແປງຮ່າງໄດ້ທຸກຢ່າງ
- ເຮັດຕາມຄຳບັນຊາຂອງພະອົງອັລລໍຫທຸກຢ່າງບໍ່ມີການຝ່າຝືນ
- ມີຈຳນວນຫຼາຍບໍ່ມີໃຜຮູ້ໄດ້ນອກຈາກອັລລໍຫ

ລວມເຖິງຄຸນນະລັກສະນະອື່ນໆ ຂອງບັນດາເທວະທູດທີ່ໄດ້ລະບຸໄວ້ໃນຄຳພີອັລກຸຣອານ ແລະອັລຫະດິຊ (ຄຳກ່າວຂອງທ່ານນາບີມຸຫັມມັດ)

## 8. ມະລາອິກະຫ໌ 10 ທ່ານ ແລະໜ້າທີ່ຂອງເທວະທູດ

ມະລາອິກະຫ໌ທີ່ສຳຄັນທີ່ຖືກລະບຸຊື່ ລວມທັ້ງໜ້າທີ່ການງານຂອງເທວະດາເອົາໄວ້ ແລະເຮົາຄວນຈົດຈຳເອົາໄວ້ ມີດັ່ງນີ້

1.ຈິບຣີລ جِبْرِيْل "ເປັນເທວະທູດທີ່ເຮັດໜ້າທີ່ນຳຄຳບັນຊາຈາກພຣະອົງອັລລໍຫ໌ ມາສູ່ບັນດານະບີທັ້ງຫຼາຍ"

2. ມີກາອີລ مِيْكَا ئِيْل "ເປັນເທວະທູດທີ່ເຮັດໜ້າທີ່ນຳປັດໄຈຢັງຊີບ ມາສູ່ມວນມະນຸດ ແລະສັດໂລກທັ້ງຫຼາຍ"

3. ອິສຣໍຟີລ إِسرَافِيْل ເປັນເທວະທູດເຮັດໜ້າທີ່ເປົ່າເກສັນຍານວັນສິ້ນໂລກ

4. ອິຊຣໍອີລ عِزْرَائِيْل " ເປັນເທວະທູດທີ່ເຮັດໜ້າທີ່ທອດຖອນວິນຍານຂອງມະນຸດ ແລະສິ່ງທີ່ມີຊີວິດທຸກຊະນິດ"

5. ມຸງກັຣ مُنْكَرْ "ເປັນເທວະທູດທີ່ເຮັດໜ້າທີ່ສອບສວນຜູ້ຢູ່ໃນປ່າຊາ" (ໂລກອາລັມບັຣຊັດ)

6. ນາກິຣ نَكِيْر "ເປັນເທວະທູດທີ່ເຮັດໜ້າທີ່ສອບສວນຜູ້ຢູ່ໃນປ່າຊ່າ (ໂລກອາລັມບັຣຊັດ)"

7. ຣໍກີບ رَقِيْب "ເປັນເທວະທູດທີ່ເຮັດໜ້າທີ່ຈົດບັນທຶກການງານທີ່ດີຂອງມະນຸດ (ຢູ່ບາຂ້າງຂວາ)"

8. ອາຕີດ عَتِيْد "ເປັນເທວະທູດທີ່ເຮັດໜ້າທີ່ຈົດບັນທຶກການວານຊົ່ວຂອງມຸດ (ຢູ່ບາຂ້າງຊ້າຍ)"

9. ຣິດວານ رِضْوَان "ເປັນເທວະທູດທີ່ເຮັດໜ້າທີ່ຄວບຄູມດູແລ ສວນສະຫວັນ"

10. ມາລິກ مَالِك ":ເປັນເທວະທູດທີ່ເຮັດໜ້າທີ່ຄວບຄຸມດູແລ ນະຣົກ"

## 9. ຄຸນນະລັກສະນະສຳຄັນ ສຳຫຼັບບັນດາຣໍສູລ 4 ປະການ

ຣໍສູລເປັນສາສະນະທູດຂອງພະອົງອັລລໍຫ໌ ທີ່ເຮັດໜ້າທີ ເຊີນຊວນມະນຸດມາສູ່ຫົນທາງທີ່ຖືກຕ້ອງ ພວກບັນດານະບີທັ້ງຫຼາຍນັ້ນມີຄຸນ ນະລັກສະນະ ປະເສີດຫລາກຫຼາຍ ດັ່ງເຊັ່ນ

1. ອັສສິດກຸ اَلصَّدِقُ ມີສັດຈະ ເວົ້າແທ້
2. ອັລອະມານະຕູ اَلإِمَانَةُ ມີຄວາມໄວ້ວາງໃຈໄດ້
3. ອັລຟະຕໍນະຫຕຸ اَلْفَطَانَةُ ມີຄວາມສະລຽວສະລາດ
4. ອັດຕັບລີກູ اَلتَبْلِيْغُ ນຳບົດບັນຍັດຂອງສາສະໜາ ອອກເຜີຍແຜ່ໂດຍບໍ່ປົດບັງແຕ່ປະການໃດ

☪☪☪☪☪☪

## 10. ຣໍສູລ 25 ທ່ານ

ຣໍສູລ ຫຼືສາສະນະທູດຂອງພຣະຜູ້ເປັນເຈົ້າມີຈຳນວນຫຼາຍ ບາງລາຍງານວ່າມີທັ້ງໝົດປະມານ 313-315 ທ່ານ ແຕ່ທີ່ມີຊື່ລະບຸໃນອັລກຸຣອານ ມີຈຳນວນ 25 ທ່ານ ດັ່ງນີ້

| | | | |
|---|---|---|---|
| 1. | ອາດັມ | أَدَم | (ອະໄລຮິສສະລາມ) |
| 2. | ອິດຣີສ | إِدْرِيْس | (ອະໄລຮິສສະລາມ) |
| 3. | ນູຫ໌(ໂນອາ) | نُوْح | (ອະໄລຮິສສະລາມ) |
| 4. | ຮູດ | هُوْد | (ອະໄລຮິສສະລາມ) |
| 5. | ຊໍແລະຫ໌ | صَالِح | (ອະໄລຮິສສະລາມ) |
| 6. | ອິບຣໍຫີມ(ອັບລໍຮັມ) | إِبْرَاهِيْمْ | (ອະໄລຮິສສະລາມ) |
| 7. | ລູດ | لُوْط | (ອະໄລຮິສສະລາມ) |
| 8. | ອິສມາອີລ | إِسْمَاعِيْل | (ອະໄລຮິສສະລາມ) |
| 9. | ອິສຫາກ | إِسْحَاق | (ອະໄລຮິສສະລາມ) |
| 10. | ຍະກູບ | يَعْقُوْب | (ອະໄລຮິສສະລາມ) |
| 11. | ຢູສຸຟ(ໂຈເຊບ) | يُوْسُفُ | (ອະໄລຮິສສະລາມ) |
| 12. | ອັຍຢູບ | أَيُّوب | (ອະໄລຮິສສະລາມ) |
| 13. | ຊຸອັຍບ | شُعَيْب | (ອະລັຍຫິສສະລາມ) |

14. ມູຊາ(ໂມເສດ) مُوْسَى (ອະລັຍຫິສສະລາມ)

15. ຫາຣູນ هَارُوْن (ອະລັຍຫິສສະລາມ)

16. ຊຸລກິຟລີ ذُالْكِفْل (ອະລັຍຫິສສະລາມ)

17. ດາວູດ(ເດວິດ) دَاوُد (ອະລັຍຫິສສະລາມ)

18. ສຸລັຍມານ سُلَيْمان (ອະລັຍຫິສສະລາມ)

19. ອິລຍາສ إِلْيَاس (ອະລັຍຫິສສະລາມ)

20. ອັລຍາຊະຫ໌ اَلْيَسَعْ (ອະລັຍຫິສສະລາມ)

21. ຍູນຸສ يُوْنُس (ອະລັຍຫິສສະລາມ)

22. ຊະກະຣີຢາ زَكَرِيَا (ອະລັຍຫິສສະລາມ)

23. ຍະຫ໌ຢາ يَحْيَى (ອະລັຍຫິສສະລາມ)

24. ອິຊາ(ພຣະເຍຊູ) عَيْسَى (ອະລັຍຫິສສະລາມ)

25. ມຸຮຳຫມັດ مُحَمَّدُ (ຊັລລັລລໍ ຮຸອາໄລຮິ ວະຊັລລັມ) ທ່ານເປັນນະບີທ່ານສຸດທ້າຍ ແລະຈະບໍ່ມີອີກແລ້ວ

## 11. ອຸລຸລອັຊມີ (ຜູ້ມີຄວາມຕັ້ງໃຈເຂັ້ມແຂ່ງເດັດດ່ຽວ)

ໝາຍເຖິງສາສະໜະທູດຂອງພຣະຜູ້ເປັນເຈົ້າອັລລໍຫ໌ ທີ່ມີປະຫວັດອັນໂດດເດັ່ນ ແລະຜະເຊີນກັບພາລະກິດທີ່ນັກໜ່ວງ ແຕ່ພວກທ່ານກໍ່ອົດທົນຢືນຍັດຈົນການງານເຜີຍແຜ່ຂອງທ່ານສຳເລັດ ທ່ານສາສະດາເຫຼົ່ານັ້ນໄດ້ແກ່

1. ນູຫ໌ نُوْح (ອະໄລຮິສສະລາມ)
2. ອິບຣໍຫີມ إِبْرَاهِيْمٌ (ອະໄລຮິສສະລາມ)
3. ມູຊາ مُوْسَى (ອະໄລຮິສສະລາມ)
4. ອີຊາ عَيْسَى (ອະໄລຮິສສະລາມ)
5. ມຸຫັມມັດ مُحَمَّدُ (ຊັລລັລລໍ ຮຸອາໄລຮິ ວະຊັລລັມ)

## 12. ປະຫວັດນາບີມຸຮຳຫມັດ (ຊັລລັລລໍ ຮຸອາໄລຮິ ວະຊັລລັມ) ແລະເຫດການສຳຄັນໃນຊີວິດຂອງທ່ານນະບີ

ນະບີທີ່ປະເສີດທີ່ສຸດຄື ທ່ານນະບີມຸຫັມມັດ (ຊັລລັລລໍຯ) ໃນຊ່ວງຊີວິດ 63 ປີ ຂອງທ່ານນະບີ ມີເຫດການທີ່ຄວນຈົດຈຳຫລາກຫຼາຍ ດັ່ງນີ້

1. ທ່ານຢູ່ໃນທ້ອງຂອງແມ່ 2 ເດືອນຜູ້ເປັນພໍ່ຄືທ່ານ “ອັບດຸລລໍຫ໌” ໄດ້ເສຍຊີວິດ
2. ທ່ານໄດ້ກຳເນີດ ໃນວັນຈັນ ທີ 12 ເດືອນຣໍບີອຸລເອົາວັລ ຫສ. 571 (ປະມານ ພ.ສ.1112)

3. ອາຍຸ 6 ປີ ແມ່ຂອງທ່ານໄດ້ເສຍຊີວິດຈຶ່ງຕ້ອງໄດ້ໄປຢູ່ກັບພໍ່ຕູ່ທ່ານຊື່ວ່າ “ອັບດຸລມຸດຕໍລິບ”
4. ອາຍຸໄດ້ 8 ປີ ພໍ່ຕູ່ເສຍຊີວິດລົງ ຕ້ອງໄປອາສັຍຢູ່ນໍາລຸງ ທ່ານຊື່ວ່າ “ອາບູຕໍລິບ”
5. ອາຍຸ 12 ປີ ທ່ານໄດ້ອອກເດີນທາງໄປຄ້າຂາຍນໍາລຸງຂອງທ່ານທີ່ປະເທດຊີເຣຍ
6. ອາຍຸ 20 ປີ ໄດ້ເຮັດທຸລະກິດໃຫ້ທ່ານຍິງຄໍດີຍະຫ໌ ເສດທີຊາວມັກກະຫ໌
7. ອາຍຸ 25 ປີ ໄດ້ແຕ່ງງານກັບທ່ານຍິງຄໍດີຍະຫ໌ (ເຊິ່ງທ່ານອາຍຸ 40ປີ)
8. ອາຍຸ 35 ປີ ສາມາດແກ້ໄຂ້ປັນຫາໃຫ້ຂອງຊາວມັກກະຫ໌ກໍລະນີຫີນດໍາ ຈົນໄດ້ຮັບການຍອມຮັບໃນສັງຄົມອາຣັບ
9. ອາຍຸ 40 ປີ ໄດ້ຮັບການແຕ່ງຕັ້ງເປັນທ່ານສາສະດາ
10. ອາຍຸ 63 ປີ ທ່ານເສຍຊີວິດກັບຄືນສູ່ຄວາມເມດຕາຂອງພຣະອົງອັລລໍຫ໌ 2 ຣໍບີອຸລເອົາວັລ

## 13. ມັ່ວະຊີຍາດ (ເຫດການປະຕິຫານໃນຊີວິດຂອງສາສະດາມຸຮໍາມັດ)

ມີເຫດການຫຼາຍຢ່າງທີ່ເກີນຂຶ້ນໃນຊ່ວງຊີວິດຂອງທ່ານ ເຊິ່ງເປັນເຫດການທີ່ຊ່ວຍເຮັດໃຫ້ເຮົາມີອີມານຄວາມສັດທາຕໍ່ທ່ານ ແລະເປັນຂໍ້ຢືນຢັນວ່າທ່ານນັ້ນເປັນສາສະດາຢ່າງແທ້ຈິງ ຕົວຢ່າງປະຕິຫານຕ່າງໆ ດັ່ງນີ້

1.ອັລກຸຣອານ ເປັນຄໍາພີທີ່ປະຕິຫານອັນຍິ່ງໃຫຍ່ສໍາລັບທ່ານສາສະດາ (ຊັລລັລລໍຮຸໆ) ເພາະທ່ານບໍ່ສາມາດອ່ານໄດ້ຂຽນເປັນ

2. ທ່ານຖືກຜ່າຕັດທີ່ໜ້າອົກໃນຊ່ວງໄວເດັກທັ້ງໆທີ່ວ່າວິທະສາດຍັງບໍ່ມີ ແຕ່ທ່ານກໍ່ປອດໄພດ້ວຍຄວາມສາມາດຄວາມຍິ່ງໃຫຍ່ຂອງອັລລໍຫ

3. ມີນ້ຳພຸ່ງອອກມາຈາກນິ້ວມື ເມື່ອສາວົກຂອງທ່ານຂາດແຄນນ້ຳ

4. ອາຫານມີພຽງນ້ອຍດຽວແຕ່ສາມາດເລີ້ຍງກອງທັບເປັນພັນຄົນໄດ້

5. ຕົ້ນໄມ້ຍ້າຍໂຕ ມາຕາມຄຳເອີ້ນຂອງທ່ານນາບີ

6. ການເດີນທາງຈາກມັກກະຫ໌ໄປທີ່ບັຍຕຸລມັກດິສ (ຍະລູສະເລມ) ເພື່ອຂຶ້ນຟາກຟ້າໄປຮັບການລະຫມາດຈາກພຣະອົງອັລລໍຫ໌ ແລ້ວກັບມາພຽງຄືນດຽວ

7. ການເດີນທາງອົບພະຍົບຈາກມັກກະຫ໌ໄປ ເມືອງມາດີນະຫ໌ດ້ວຍຄວາມປວດໄພ

8. ຕົ້ນໄມ້ແລະກອນຫີນໃຫ້ສະລາມກັບທ່ານນາບີ

## 14. ຄຳພີທີ່ອັລລໍຫ໌ ປະທານໃຫ້ແກ່ບັນດານາບີທັ້ງຫຼາຍ

- ❈ ຄຳພີເຕົາຣອດ التَّوْرَاةَ ປະທານໃຫ້ແກ່ ທ່ານນາບີມູຊາ
- ❈ ຄຳພີຊາບູຣ زَابُور ປະທານໃຫ້ແກ່ ທ່ານນາບີດາວູດ
- ❈ ຄຳພີອິນຈີລ الإِنْجِيْلَ ປະທານໃຫ້ແກ່ ທ່ານນາບີອີຊາ
- ❈ ຄຳພີອັລກຸຣອານ القُرْآنُ ປະທານໃຫ້ແກ່ ທ່ານນາບີມຸຫັມມັດ

## 15. ພຣະຄຳພີອັລກຸຣອານ

ຄຳພີອັລກຸຣອານມີທັ້ງໝົດ 30 ຍຸຊ (ພາກ) ແບ່ງອອກເປັນບົດເອີ້ນວ່າ "ສູເຣາະຫ໌" ມີທັ້ງໝົດ 114 ສູເຣາະຫ໌ ແຕ່ລະສູເຣາະຫ໌ (ບົດ) ມີການຍະວ່າງທີ່ສັ້ນຍາວເອີ້ນວ່າ "ອາຍະຫ໌" ມີອາຍະຫ໌ທັ້ງໝົດ 6236 ອາຍະຫ໌ (ບໍ່ແນ່ນອນ) ແລະຖືກປະທານແກ່ທ່ານນະບີທັ້ງໃນເມືອງມັກກະຫ໌ ແລະເມືອງມາດີນະຫ໌ ເອີ້ນວ່າ "ມັກກີຍະຫ໌" ແລະ "ມັດດີຍະຫ໌"

## 16. ໜ້າທີ່ຂອງເຮົາຕໍ່ອັລກຸຣອານ

ໃນຖານະຂອງຜູ້ສັດທາເຮົາມີໜ້າທີ່ຈະຕ້ອງປະຕິບັດຕໍ່ອັລກຸຣອານດັ່ງນີ້

1. ເຊື່ອໝັ້ນສັດທາວ່າອັລກຸຣອານຄືຄຳພີເລັ່ມສຸດທ້າຍທີ່ມາຈາກພຣະອົງອັລລໍຫ໌
2. ອ່ານ ທ່ອງຈຳ ສຶກສາ ແລະພິຈາລະນາຄວາມໝາຍຂອງອັລກຸຣອານ
3. ປະຕິບັດຕາມຄຳສັ່ງສອນຄຳສັ່ງໃຊ້ ແລະຫ້າມຈາກອັລກຸຣອານ
4. ເຜີຍແຜ່ຄຳສອນຈາກອັລກຸຣອານ
5. ຊີ້ນຳຜູ້ຄົນ ພໍ່ແມ່ ພີ່ນ້ອງ ໝູ່ຄູ່ ມາສູ່ຫົນທາງແຫ່ງອັລກຸຣອານ

## 17. ມາລະຍາດໃນການອ່ານອັລກຸຣອານ

ເພື່ອໃຫ້ການອ່ານອັລກຸຣອານໄດ້ຜົນລະບຸນຫຼາຍທີ່ສຸດ ມຸສລິມເຮົາຕ້ອງຮູ້ມາລະຍາດໃນການອ່ານອັລກຸຣອານ ດັ່ງນີ້

1. ນັ່ງຫັນໜ້າໄປທາງກິບລັດ(ທິດຕະເວັນຕົກ)
2. ຄວນມີນ້ຳລະຫມາດ

3. ຢ່າອ່ານໄວ້ເກີນໄປ ຄວນອ່ານຊ້າໆ ຊັດເຈນ
4. ສຶກສາວິທີການອ່ານອັລກຸຣອານໃຫ້ຖືກຕ້ອງຕາມຫຼັກໄວຍະກອນ
5. ສຶກສາຄວາມໝາຍຂອງອັລກຸຣອານ ເພື່ອຈະໄດ້ອ່ານເຂົ້າໃຈ ແລະ ມີອາລົມຕາມອາຍະຫ໌ (ບົດ) ທີ່ເຮົາອ່ານ
6. ການອ່ານອັລກຸຣອານສຽງດັງຫຼືສຽງຄ່ອຍ ໃຫ້ເບິ່ງຢູ່ເຈດຕະນາ ສະຖານະການທີ່ເໝາະສົມ
7. ຄວນອ່ານອັລກຸຣອານດ້ວຍສຽງທີ່ມວນອ່ອນສ່ອນ

## 18. ວັນອາຄິເຣາະຫ໌ (ວັນສິ້ນໂລກ) ສິ່ງທີ່ມະນຸດຕ້ອງພົບເຈີວັນນັ້ນ

ມຸສລິມເຊື່ອໝັ້ນສັດທາວ່າ ວັນອາຄິເຣາະຫ໌ເຊິ່ງເປັນວັນສິ້ນສຸດຂອງໂລກນີ້ ຕ້ອງມີແນ່ນອນແລະເຮົາກໍ່ເຊື່ອແນວນັ້ນ ແລະມີຫຼາຍສິ່ງຫຼາຍຢ່າງທີ່ມະນຸດຕ້ອງພົບເຈີໃນວັນນັ້ນ

- ★ ຄວາມຕາຍ
- ★ ການສອບສວນ ການລົງໂທດໃນປ່າຊ້າ
- ★ ການເປົ່າເກສັນຍານວັນສິ້ນໂລກ
- ★ ການຄືນຟື້ນຊີບ
- ★ ການເດີນທາງໄປທົ່ງມະຫ໌ຊັຣ (ໂລກໜ້າ)
- ★ ການຮັບບັນຊີຄວາມດີຄວາມຊົ່ວດ້ວຍມືຂວາຫຼືຊ້າຍ
- ★ ການຊຸມນຸ່ມເພື່ອການຊຳລະ ແລະການຕອບແທນ
- ★ ການສອບສວນພິພາກສາຕໍ່ໜ້າພຣະອົງອັລລໍຫ໌
- ★ ການຊັ່ງບຸນຊັ່ງບາບ (ຖ້າຫາກຄວາມດີເຮົາມີຫຼາຍຕາຊັ່ງກໍ່ຈະຂຶ້ນທາງຂວາບົ່ງບອກວ່າເຮົາມີຜົນລະບຸນຫຼາຍ ແລະເຮົາຈະໄດ້ຮັບຄວາມເມດຕາໄດ້ເຂົ້າສວນສະຫວັນ ແຕ່ຖ້າຫາກວ່າຄວາມ

ຊົ່ວເລ່ວຫຼາຍກວ່າຄວາມດີຕາຊັ່ງກໍ່ຈະລົງທາງຊ້າຍ ໝາຍເຖິງເຮົາມີບາບຫຼາຍ ແລະຕ້ອງຖືກລົງໃນນະຣົກເພື່ອການລົງໂທດທີ່ຫນັກນ່ວງແລະຮຸນແຮງເຈັບປວດ

★ ການທີ່ມະນຸດທຸກຄົນຕ່າງຕ້ອງການດື່ມນ້ຳເພາະຄວາມກະຫາຍ ຈາກບໍ່ນ້ຳອັລເຫົາດ໌ ເປັນບໍ່ນ້ຳຂອງທ່ານນາບີມຸຫັມມັດ (ຊັລລັລລໍຫຸຯ)

★ ການຂ້າມສະພານຊີຣອດ

★ ການໄດ້ເຂົ້າສວນສະຫວັນ ຫຼື ລົງນະຣົກ

## 19. ສັນຍານນ້ອຍກ່ອນວັນສິ້ນໂລກ

ກ່ອນມີສິ້ນໂລກຈະມາຮອດ ຈະມີສັນຍານຕ່າງໆ ເກີດຂຶ້ນຢ່າງຫລາກຫຼາຍ ສັນຍານນ້ອຍຈະເກີດຂຶ້ນມີດັ່ງນີ້

1. ມະນຸດຈະໝົດຄວາມສັດທາຕໍ່ພຣະເຈົ້າ
2. ຄົນຊົ່ວຈະໄດ້ຄອງຕຳແໜ່ງທີ່ມີກຽດໃນສັງຄົມ
3. ມະນຸດຈະເມົາມົວຢູ່ໃນຕັນຫາຂອງຕົວເອງ
4. ມີການເຂັ່ນຂ້າ ຂະໂມຍແລະຈະລາຈົນວຸ່ນວາຍຢ່າງຫຼວງຫຼາຍ
5. ຜູ້ປະຕິເສດບໍ່ສັດທາຈະລຸມທຳລ້າຍມຸສລິມ
6. ປະຊາຊາດອິສລາມຈະຍຶດຕາມແນວທາງຂອງພວກຍະຫູດີ (ຢິວ) ນັສຣໍນີ (ຄຣິສຕຽນ)
7. ຜູ້ມີຄຸນນະທຳຄວາມຮູ້ຫຼຸດລົງ ຄົນຊົ່ວຈະເພີ່ມຂຶ້ນ
8. ລູກຫຼານແທ້ໆ ຈະອະກະຕັນຍູຕໍ່ພໍ່ແມ່
9. ຜູ້ຄົນຈະບໍ່ສົນໃຈວ່າໄດ້ເງິນທອງມາໂດຍແນ່ວທາງທີ່ຫະຫາລຫຼືຫະຣອມ (ທາງທີ່ຖືກຫຼືຜິດ)

10. ດອກເບ້ຍຈະຮຸ່ງເຮືອງ
11. ຜູ້ຍິງຈະຫຼາຍກວ່າຜູ້ຊາຍ
12. ຜູ້ທີ່ຍຶດຖືເຄັ່ງສາສະໜາຈະເດືອດຮ້ອນປຽບດັ່ງກຳຖ່ານໄຟໄວ້ໃນມື
13. ເກີດການແຍ່ງຜົນປະໂຫຍດໂດຍການຂ້າຄົນບໍລິສຸດ
14. ມີການແຂ່ງຂັນກັນສ້າງມັສຍິດງາມໆ ແຕ່ບໍ່ມີຄົນລະຫມາດ
15. ອິສລາມຈະກາຍເປັນສິ່ງທີ່ແປກໜ້າສຳລັບມະນຸດ
16. ຄົນໂກຫົກຈະໄດ້ຮັບຄວາມນ່າເຊື່ອຖື
17. ການຜິດເວຫມີທົ່ວ
18. ຄົນຮຸ່ນໃຫມ່ຈະປະນາມຄົນຮຸ່ນກ່ອນ
19. ຜູ້ຍິງແຕ່ງຕົວຄືຜູ້ຊາຍ ຜູ້ຊາຍແຕ່ງຕົວຄືຜູ້ຍິງ
20. ຜູ້ຄົນຈະສຶກສາສາສະໜາແຕ່ກັບບໍ່ປະຕິບັດຕາມ
21. ການສາບານມີຫຼາຍຂຶ້ນໃນສັງຄົມ
22. ການຢ່າຮ້າງເກີນຂຶ້ນຫຼາຍໃນສັງຄົມ
23. ຜູ້ຄົນຈະຕັດຂາດກັບພີ່ນ້ອງໆ
24. ສະມາທິໃນການລະຫມາດຈະບໍ່ມີ (ເພາະຄິດແຕ່ເລື່ອງໂລກ)
25. ປະຊາຊາດຈະແຕກເປັນ 70 ຈຳພວກ (ມີຈຳພວກດຽວເທົ່ານັ້ນຈະໄດ້ເຂົ້າສວນສະຫວັນ)
26. ວັນເວລາຈະສັ້ນລົງ ປຽດດັ່ງວ່າໜຶ່ງປີ ເທົ່າກັບໜຶ່ງເດືອນ ແລະໜຶ່ງເດືອນເທົ່າກັບໜຶ່ງອະທິດ ແລະໜຶ່ງອະທິດເທົ່າກັບໜຶ່ງມື້
27. ການແຕ່ງງານເກີດຂຶ້ນເພາະສົມບັດເປັນເຫດ
28. ການຕະຫຼາດເສດຖະກິດຈະຕົກຕ່ຳຝືດຝືນ
29. ຄວາມຮັບຜິດຊອບຈະຫາຍໄປ

30. ສາສະໜາຈະຖືກຊື້ຂາຍດ້ວຍກັບວັດຖຸທາງໂລກ ແລະບໍ່ມີຄ້າ
31. ຫົວໃຈມະນຸດໝົດສິ້ນກັບຄວາມດີ
32. ຜູ້ຊາຍຈະຂ້າກັນໂດຍບໍ່ມີເຫດຜົນ
33. ເດັກທີ່ເກີດຈາກການຜິດປະເວໜີຫຼາຍ
34. ຜູ້ຍິງຈະເຮັດໜ້າທີ່ແທນຜູ້ຊາຍ
35. ຄົນຊົ່ວຈະພູມໃຈແລະໂອ້ອວດຄວາມຜິດຂອງຕົວເອງ
36. ເດັກຈະບໍ່ໃຫ້ກຽດຜູ້ໃຫຍ່ ແລະຜູ້ໃຫຍ່ຈະບໍ່ເມດຕາເດັກ
37. ການພະນັນຈະມີຫຼາຍ
38. ຄວາມຮູ້ຈະຖືກເກັບກັບສູ່ອັລລໍຫ໌ ຄົນໂງ່ຈະຂຶ້ນກ່າວສັ່ງສອນສາສະໜາ
39. ເງິນບໍລິຈາກ (ຊະກາດ) ຖືກນໍາໄປເປັນຄ່າແຮງແລະມອບໃຫ້ຄົນທີ່ບໍ່ມີສິດທີ່ຈະຮັບ
40. ແລະຍັງມີສັນຍານອື່ນໆທີ່ສາມາດສຶກສາເພີ່ມເຕີມນໍາອາຈານຜູ້ຮູ້ເຂົ້າໃຈສາສະໜາທີ່ດີເພື່ອຈະໄດ້ເຮັດໃຫ້ອອກຫ່າງບໍ່ປະຕິບັດແນວທາງທີ່ຈະພາເຮົາໄປສູ່ແນວທາງທີ່ບໍ່ຖືກຕ້ອງຈົນສາມາດເຮັດໃຫ້ເຮົາຕົກນະຮົກ ເພຣາະນະຮົກນັ້ນມັນຮຸນແຮງບໍ່ຄຸມທີ່ຈະລອງ

## 20. ສິບສັນຍານໃຫຍ່ກ່ອນວັນສິ້ນໂລກ

ນອກຈາກສັນຍານນ້ອຍໄປແລ້ວ ເມື່ອໃກ້ສິຮອດວັນກິຍາມະຫ໌ (ວັນສິ້ນໂລກ) ຈະມີສັນຍານໃຫຍ່ທະຍ່ອຍເກີດຂຶ້ນມາ ຕາມທີ່ທ່ານນາບີມຸຫັມມັດໄດ້ເລົ່າເຖິງເຫດການໃນວັນນັ້ນໃຫ້ຟັງມີດ້ວຍກັນສິບປະການຫຼັກໆ ດັ່ງນີ້

1. ຈະມີຫມອກປົກຄຸມໄປທົ່ວ (ເຮັດໃຫ້ຜູ້ປະຕິເສດສັດທາຫາຍໃຈບໍ່ອອກ)
2. ຍະຈູດ-ມະຈູດ ຈະປະກົດຂຶ້ນ (ສ້າງຄວາມເສຍຫາຍຢ່າງມາຫະສານ ທຳລາຍ ແລະກິນທຸກຢ່າງທີ່ຂວາງໜ້າ ເນື່ອງຈາກຄວາມຫິວໂຫຍທີ່ຖືກຂັງຈາກອັລລໍຫ໌ເປັນເວລາຍາວນານ)
3. ອິມ່າມມະຫ໌ດີ ຈະມາ ແລະສ້າງຄວາມເຂັ້ມແຂ່ງໃຫ້ອິສລາມອີກຄັ້ງ ແລະ ຮອບຮວມມຸສລິມຜູ້ສັດທາຕໍ່ສູ້ກັບ ຍະຈູດ-ມະຈູດ
4. ດັດຈາລ ຈະປະກົດຂຶ້ນ (ເປັນຄົນຕົວນ້ອຍເວົ້າເກັ່ງ ມີຕາຂ້າງດຽວບົນໜ້າຜາກ ສາມາດເຮັດໃຫ້ຄົນທີ່ຟັງຄຳເວົ້າຂອງດັດຈາລເຊື່ອໃນສິ່ງນັ້ນແລະປະຕິບັດຕາມ ຜູ້ຍິງຈະລົງໄລ ສາມາດຊຸບຊີວິດຄົນທີ່ຕາຍໄປແລ້ວກັບມາຊີວິດ ສາມາດເຮັດໃຫ້ຄົນຕາບອດກັບມາເບິ່ງເຫັນໄດ້ ແລະອີກຫລາກຫຼາຍທີ່ເປັນຄວາມສາມາດຂອງດັດຈາລ ທີ່ຈະມາຫລອກລວງໃຫ້ມະນຸດຍຸກສຸດທ້າຍເຊື່ອ ແລະປະຕິເສດພຣະເຈົ້າໃນທີ່ສຸດ)
5. ນາບີອີຊາ ຈະລົງມາຈາກຟາກຟ້າ (ເພື່ອຟື້ນຟູອິສລາມໃຫ້ມີຄວາມເຂັ້ມແຂ່ງອີກຄັ້ງແລະຈັດການກັບດັດຈາລຜູ້ທີ່ສ້າງຄວາມວຸ່ນວາຍໃນໂລກຍຸກສຸດທ້າຍ)
6. ສັດແຫ່ງແຜ່ນດິນຈະປະກົດຂຶ້ນ (ມີຊື່ວ່າດາບບະຕູລອັຣດ໌)

7. ດວງຕະເວັ່ນຈະຂຶ້ນທາງທິດຕະເວັ່ນອອກ
8. ເກີດແຜ່ນດິນໄຫວທາງທິດຕະເວັນອອກແລະຕົກ ແລະຄາບສະມຸດອາຣັບ (ແລະທຸກສິ່ງທີ່ຢູ່ໃນພື້ນແຜ່ນດິນຈະລະບາຍອອກມາທັ້ງໝົດ)
9. ໄຟຈະລຸກໄມ້ຈາກດິນແດນເຢເມນ ແລະໄລ່ຕອນທຸກຄົນມາສູ່ສະຖານທີ່ດຽວກັນ
10. ແລະສັນຍານອື່ນທີ່ສຳຄັນສາມາດຮຽນຮູ້ຈາກອາຈານ ຜູ້ຮູ້ເພີ່ມເຕີມ ເພາະເລື່ອຖືວ່າເປັນເລືອງສຳຄັນ ແລະມຸສລິມທຸກຄົນຕ້ອງສຶກສາເພື່ອໃຫ້ສາບເຖິງແນວທາງແລະວິທີປ້ອງກັນຕົວເອງໃຫ້ຮອດພົ້ນຈາກວັນກີຍາມະຫ໌ທີ່ຊົ້ວຮ້າຍນີ້

ບັນທຶກລາຍງານໂດຍ ບຸກຄໍຣີ ມຸສລິມ ຕິຣມີຊີ

## 21. ກໍດໍ່ ກໍດັຣ (ຄວາມດີຄວາມຊົ່ວ)

ກໍດໍ່ ກໍດັຣ ໝາຍເຖິງການເຊື່ອໝັ້ນວ່າ ຄວາມດີຄວາມຊົ່ວທຸກຢ່າງລ້ວນເກີດຂຶ້ນດ້ວຍການກຳໜົດຂອງພຣະອົງອັລລໍຫ໌ ແລະພຣະອົງຈະຊົງເຮັດຕາມສິ່ງທີ່ພຣະອົງປະຊົງ ດັ່ງນັ້ນທຸກສິ່ງທຸກຢ່າງຍ່ອມເປັນໄປດ້ວຍຄວາມປະຊົງຂອງອັລລໍຫ໌ ພຣະອົງຮູ້ດີໃນທຸກສິ່ງທຸກຢ່າງທີ່ເກີດຂຶ້ນແລະທຸກສິ່ງທຸກຢ່າງທີ່ຍັງບໍ່ເກີດຂຶ້ນ ໜ້າທີ່ມະນຸດຄືການເຊື່ອສັດທາວ່າການກຳໜົດເຫດການຕ່າງໆ ຫຼື ທຸກສິ່ງທຸກຢ່າງທີ່ມັນເຂົ້າມາໃນຊີວິດເຮົາບໍ່ວ່າຈະເປັນສິ່ງທີ່ດີ ຫຼື ບໍ່ດີ ນັ້ນເປັນຄວາມລີ້ລັບຢ່າງໜຶ່ງໃນການສ້າງສັນຂອງອັລລໍຫ໌ ແລະ ເຮົາຈະຕ້ອງພະຍາຍາມປະພຶດຕົນໃຫ້ດີທີ່ສຸດຕາມຄຳສັ່ງຂອງອັລລໍຫ໌ ແລະ ແບບຢ່າງ

ຈາກທ່ານສາສະດາຂອງພຣະອົງ ສ່ວນສິ່ງໃດທີ່ເກີດຂຶ້ນແກ່ຊີວິດເຮົາຕ້ອງມອບໝາຍຕົນເອງຕໍ່ອັລລໍຫ໌ຢ່າງຈຳນົນ ແລະ ຄິດສະວ່າເປັນວິທະຍະປັນຍາ ແລະຄວາມເມດຕາຈາກພຣະອົງອັລລໍຫ໌ ການເຊື່ອໃນກໍດໍ່ ກໍດັຣ ຈະເຮັດໃຫ້ມຸສລິມ ມີຈິດໃຈສະຫງົບຄວາມມັ່ນຄົງ ແລະ ເຂັ້ມແຂ່ງ

## 22. ຊື່ຂອງການລະຫມາດທັ້ງ 5 ເວລາ

ນະມາຊ ຫຼື ການລະຫມາດຟັຣດູ ມີ 5 ເວລາ ຄື

1. ລະຫມາດຊຸບຮີ (ຕອນ 5 ໂມງເຊົ້າເລີ່ມຕັ້ງແຕ່ແສງອະລຸນຂຶ້ນຈົນຮອດຕະເວັນຂຶ້ນ)
2. ລະຫມາດຊຸຫ໌ຣີ (ຕອນ 12 ໂມງເລີ່ມຕັ້ງແຕ່ຕະເວັນຄ້ອຍຈົນເຖິງເວລາທີ່ເງົາສະເໝີກັບຕົວເອງ)
3. ລະຫມາດອັສຣີ (ຕອນ 3 ໂມງເລີ່ມຕັ້ງແຕ່ເງົາຖອດສະເໝີກັບຕົວເອງຈົນຕະເວັນລັບຟ້າ)
4. ລະຫມາດມັກຣິບ (ຕອນ 6 ໂມງແລງເລີ່ມຕັ້ງແຕ່ຕະເວັນລັບຟ້າຈົນສິ້ນແສງເງິນແສງທອງ)
5. ລະຫມາດອີຊາ (ຕອນ 8 ໂມງຄ່ຳເລີ່ມຕັ້ງແຕ່ເວລາແສງເງິນແສງທອງຈົນຮອດກາງດຶກ) “ບາງລາຍງານວ່າຫຼືຈົນຮອດເວລາຊຸບຮີ”

## 23. ນ້ຳສະອາດທັ້ງ 7 ຊະນິດ

ນ້ຳສະອາດທັ້ງ 7 ຊະນິດ ໝາຍເຖິງນ້ຳທີ່ສາມາດເອົາມາໃຊ້ເຮັດຄວາມສະອາດ ອາບນ້ຳ ລ້າງສິ່ງຂອງ ເອົານ້ຳລະຫມາດ

- ▷ ນ້ຳລູກເຫັບ
- ▷ ນ້ຳຫິມະ
- ▷ ນ້ຳອ້າງ ນ້ຳບາດານ
- ▷ ນ້ຳຈາກແມ່ນ້ຳ ນ້ຳລຳທານ
- ▷ ນ້ຳຈາກຕານ້ຳ
- ▷ ນ້ຳທະເລ ມະຫາສະມຸດ
- ▷ ນ້ຳຝົນ ນ້ຳຄ້າງ ນ້ຳຕົກ

## 24. ນະຍິສ 3 ປະເພດ

**ນະຍິສ** ໝາຍເຖິງ ສິ່ງສົກກະປົກບໍ່ສະອາດ ເຊິ່ງຫາກຜູ້ໃດກໍ່ຕາມທີ່ສັມຜັດໄປເຕະຕ່ອງ ຈຳເປັນຕ້ອງຊຳລະລ້າງດ້ວຍວິທີຕ່າງໆ ນະຍິສມີ 3 ປະເພດ ດັ່ງນີ້

1. ນະຍິສ ມຸຄໍຟຟາຟະຫ໌ (ນະຍິສເບົາ) ເຊັ່ນ ຢ່ຽວຂອງເດັກນ້ອຍອາຍຸບໍ່ເກີນສອງປີ
2. ນະຍິສ ມຸຕະວັສຊິເຕາະຫ໌ (ນະຍິສປານກາງ) ເຊັ່ນ ອູດຈະລະ(ຂີ້) ປັດສາວະ (ຢ່ຽວ) ຫຼື ເລືອດ
3. ນະຍິສ ມຸກອລລະເຊາະຫ໌ (ນະຍິສໃຫຍ່) ເຊັ່ນ ສຸກອນ (ໝູ) ນ້ຳລາຍໝາ ແລະປັດສາວະ(ຢ່ຽວ)ຂອງສັດທັ້ງສອງ

## 25. ຫະດັຊ

ຫະດັຊ ໝາຍເຖິງ ສະພາບຄວາມບໍ່ສະອາດຂອງບຸກຄົນຕາມສາສະໜາໄດ້ບັນຍັດເອົາໄວ້

ຫະດັຊແບ່ງເປັນ 2 ປະເພດ ຄື

1. ຫະດັຊນ້ອຍ ຄື ການທີ່ບຸກຄົນໜຶ່ງບໍ່ມີນ້ຳລະຫມາດ ເມື່ອລາວອາບນ້ຳລະຫມາດ ຫະດັຊນ້ອຍກໍ່ຈະໝົດໄປ
2. ຫະດັຊໃຫຍ່ ຄື

   2.1. ການທີ່ບຸກຄົນໜຶ່ງມີນ້ຳອະສຸຈິລັງອອກມາ ຫຼື

   2.2. ການມີເພດສັມພັນ (ຈຸນຸບ) ຫຼື

   2.3. ມີປະຈຳເດືອນ (ເຫດ) ຫຼື

   2.4. ຜູ້ຍິງທີ່ມີເລືອດຫຼັງຈາກເກີດລູກ (ນິຟາສ)

   2.5. ຫຼືຜູ້ຍິງທີ່ເກີດລູກ (ວິລາດະຫ໌) ຫຼື

   2.6. ຄົນຕາຍ,
   ເຊິ່ງທັ້ງ 6 ກໍລະໜີນີ້ ຈຳເປັນ (ວາຍິບ) ຈະຕ້ອງອາບນ້ຳຊຳລະລ້າງຮ່າງກາຍ ເອີ້ນວ່າ ອາບນ້ຳຢົກຫະດັຊໃຫຍ່

**ວິທີອາບນ້ຳຢົກຫະດັຊໃຫຍ່ຕາມແບບຢ່າງຂອງທ່ານນາບີ**

1. ຕັ້ງເຈດຕະນາວ່າ ອາບນ້ຳຢົກຫະດັຊໃຫຍ່ເພື່ອອັລລໍຫ໌
2. ລ້າງມືທັ້ງສອງຂ້າງ (ລ້າງສາມຄັ້ງ) ໃຫ້ສະອາດ
3. ລ້າງທະວານໜັກ ທະວານເບົາໃຫ້ສະອາດ

4. ອາບນ້ຳລະຫມາດໂດຍອາດຈະລ້າງຕີນທັ້ງສອງຫຼືຈະຢັງບໍ່ລ້າງກໍ່ໄດ້
5. ເອົານ້ຳຫົດຫົວສາມຄັ້ງ ໂດຍການລ້າງສະຜົມເພື່ອໃຫ້ແນ່ໃຈວ່ານ້ຳຊຶ່ມທົ່ວຫົວ ຫາກມັດຜົມໄວ້ຕ້ອງເກາະຜົມນຳ
6. ເອົານ້ຳຫົດດ້ານຂວາຂອງຮ່າງກາຍໃຫ້ທົ່ວແລ້ວຫົດທາງຊ້າຍໃຫ້ທົ່ວຄືກັນ ພ້ອມກັບຖູສະບູຕາມຮ່າງກາຍໃຫ້ສະອາດ
7. ລ້າງຕີນຂວາກ່ອນຕີນຊ້າຍ ຄືກັບການເອົານ້ຳລະຫມາດຫຼັງຈາກນັ້ນກໍ່ຖືວ່າເສັດສິ້ນການອາບນ້ຳຢົກທະດັຊໃຫຍ່

## 26. ຟັຣດູ (ກົດ) ການອາບນ້ຳລະຫມາດ

ສິ່ງທີ່ຈຳເປັນທີ່ຕ້ອງເຮັດ ຫຼືກົດຂອງການອາບນ້ຳລະຫມາດມີ 6 ປະການ

1. ນຽດຫຼືຕັ້ງເຈດຕະນາ ຂ້າພະເຈົ້າເອົານ້ຳລະຫມາດຫຼືເຮັດວຸດູເພື່ອອັລລໍຫ໌ ຕະອາລາ (ເວົ້າໃນໃຈ)
2. ລ້າງໜ້າຈົນທົ່ວບໍລິເວນໃບໜ້າ
3. ລ້າງມືທັ້ງສອງຂ້າງຈົນເຖິງແຂນສອກ
4. ໃຊ້ນ້ຳເຊັດຜົມເບົາໆ
5. ລ້າງຕີນທັ້ງສອງຂ້າງໃຫ້ທົ່ວຈົນຮອດຕາຕຸ່ມ
6. ປະຕິບັດຕາມຕັ້ງແຕ່ 1-5 ໃຫ້ຄົບຖ້ວນ

## 27. ຕະຍັມມຸມ

ຕະຍັມມຸມ ໝາຍເຖິງ ການໃຊ້ມືທັ້ງສອງຂ້າງຕົບຝຸ່ນສະອາດ ແລ້ວລູບໜ້າ ແລະມືທັ້ງສອງ ໂດຍເປັນການເຮັດຄວາມສະອາດແທນນ້ຳລະຫມາດ ແລະ ການອາບນ້ຳວາຈິບ

**- ອະນຸຍາດໃຫ້ເຮັດຕະຍັມມຸມແທນນ້ຳໃນກໍລະນີດັ່ງຕໍ່ໄປນີ້**

1. ບໍ່ມີນ້ຳ ຫຼືມີນ້ຳບໍ່ພຽງພໍສຳລັບໃຊ້ເຮັດຄວາມສະອາດ
2. ມີບາດແຜ ຫຼືເປັນໂລກທີ່ສົມຜັດນ້ຳບໍ່ໄດ້
3. ນ້ຳມີຄວາມເຢັນຈັດອາດເຮັດໃຫ້ເປັນອັນຕະລາຍຕໍ່ຊີວິດ ຫຼືມີເຫດທີ່ນ້ຳເປັນຂອງຄົນບໍ່ດີອັນຕະພານຫາກໄປເອົາມາແລະເຂົາເຂົ້າອາດຂ້າເຮົາໄດ້
4. ມີຄວາມຈຳເປັນທີ່ຈະຕ້ອງໃຊ້ນ້ຳເພື່ອບໍລິໂພກ ບໍ່ພໍສຳລັບການເອົານ້ຳລະຫມາດ ຫຼືການອາບນ້ຳຍົກຫະດັຊ

**- ສິ່ງທີ່ໃຊ້ເຮັດຕະຍັມມຸມ ແລະ ວິທີການເຮັດຕະຍັມມຸມ**

1. ສິ່ງທີ່ເອົາມາເຮັດຕະຍັມມຸມໄດ້ຄື ຝຸ່ນ ຊາຍ
2. ສິ່ງທີ່ເອົາມາເຮັດຕະຍັມມຸມບໍ່ໄດ້ຄື ຂີ້ເຖົ່າ ປູນສີເມັນ ປູນຂາວ ຫຼືສິ່ງທີ່ປຽນສະພາບກາຍມາເປັນຝຸ່ນສາເຫດຈາກການຈູດໄມ່
3. ໃສ່ຝ້າມືຕົບເບົາໆລົງເທິງຝຸ່ນ ພ້ອມຕັ້ງເຈດຕະນາ ເຮັດຕະຍັມມຸມ ຖ້າມີຝຸ່ນຕິດຫຼາຍໃຫ້ເຄາະໆອອກ ແລ້ວເອົາມືທັ້ງສອງລູບໃບໜ້າຈົນທົ່ວ 1 ຄັ້ງ ໃຊ້ມືຕົບຝຸ່ນ ເບົາໆ ແລ້ວລູບມືທັ້ງສອງຮອດຂໍ້ສອກ 1 ຄັ້ງ

## 28. ຄໍາກ່າວອະຊານ ແລະ ອິກໍາມະຫ໌

ການອະຊານຄືການເອີ້ນຜູ້ຄົນມາສູ່ການລະຫມາດ 5 ເວລາ

اَللَّهُ أَكْبَرْ  اَللَّهُ أَكْبَرْ    اَللَّهُ أَكْبَرْ  اَللَّهُ أَكْبَرْ

"ອັລລໍຫຫຸອັກບັຣ"

(ຄວາມໝາຍ "ອັລລໍຫ໌ຍິ່ງໃຫຍ່")

أَشْهَدُ أنْ لا إِلَهَ إِلَّا اللَّه    أَشْهَدُ أنْ لا إِلَهَ إِلَّا اللَّه

"ອັຊຫະດຸ ອັລລາອິລາຫະ ອິລລັລລໍຫ໌"

(ຄວາມໝາຍ "ຂໍປະຕິຍານວ່າບໍ່ມີພະເຈົ້າອື່ນໃດນອກຈາກອັລລໍຫ")

أَشْهَدُ أنْ مُحَمَّداً رَسُوْلُ اللَّه    أَشْهَدُ أنْ مُحَمَّداً رَسُوْلُ اللَّه

"ອັຊຫະດຸ ອັນນະ ມຸຫັມມັດ ດັຣຣໍສູລຸລລໍຫ໌"

(ຄວາມໝາຍ "ຂໍປະຕິຍານວ່າມຸຫັມມັດເປັນສະສາດາຂອງງອັລລໍຫ")

حَيَّ عَلَى الصَّلَاة    حَيَّ عَلَى الصَّلَاة

"ໄຫຍາ ອະລັສ ສໍລາຫ໌"

(ຄວາມໝາຍ "ມາລະຫມາດເດີ!!")

حَيَّ عَلَى الْفَلَاحْ    حَيَّ عَلَى الْفَلَاحْ

"ໄຫຍາ ອະລັລ ຟາລາຫ໌"

(ຄວາມໝາຍ "ມາສູ່ຄວາມສໍາເລັດເດີ!!")

اَللَّهُ أَكْبَرْ  اَللَّهُ أَكْبَرْ

“ອັລລໍຫ ຫຸອັກບັຣ”

(ຄວາມໝາຍ “ອັລລໍຫ໌ຍິ່ງໃຫຍ່”)

لَا إِلَهَ إِلَّا اللهُ

“ລາອິ ລາຫະ ອິລລັລລໍຫ໌”

(“ບໍ່ມີພະເຈົ້າອື່ນໃດນອກຈາກອັລລໍຫ໌”)

***ໃນກໍລະນີ ອິກໍາມະຫ໌ (ກ່ອນຈະລະຫມາດ)ໃຫ້ກ່າວເພີ່ມ

قَدْ قَامَتِ الصَّلَاة

“ກ໋ອດກໍ ມະຕິສສໍລາຫ໌”

(ຄວາມໝາຍ “ການລະຫມາດໄດ້ເລີ່ມແລ້ວ”)

## 29. ຣູກົນການນະມາຊ (ລະຫມາດ)

ຣູກົນການນະມາຊ (ລະຫມາດ) ມີທັ້ງໝົດ 14 ປະການດັ່ງນີ້

1. ການນຽດ ຫຼືການຕັ້ງເຈດຕະນາວ່າເຮົາກໍາລັງລະຫມາດອີຫຍັງ
2. ການຢືນກົງ ຫາກມີຄວາມສາມາດ
3. ການກ່າວຕັກບີຣ (ອັລລໍຫຸ ອັກບັຣ)
4. ການອ່ານສູເຣາະຫ໌ ຟາຕິຫະຫ໌ ໃນທຸກຣໍກະອັດ
5. ການຣູກູອ໌ (ກົ້ມຂໍານັກ)
6. ການອຽະຕິດາລ (ເງີຍຫົວຂຶ້ນກົງຫຼັງຈາກກົ້ມຣູກຸອ໌)
7. ການສຸຍູດ (ກົ້ມລົງເອົາສີສະພ້ອມທັ້ງອະໄວຍະວະທັ້ງເຈັດ)

8. ການນັ່ງລະວ່າງສອງສຸຢູດ
9. ສູຢູດຄັ້ງທີ່ສອງ
10. ການອ່ານຕະຊະຫຸດ ຄັ້ງສຸດທ້າຍ(ອັດຕາຫິຍາ)
11. ການອ່ານຊໍລະຫວາດ (ສັນລະເຊີນ) ທ່ານນາບີ
12. ການຢຸດນິ່ງກ່ອນປ່ຽນກະລິຍາບົດໃນການປະຕິບັດລະຫມາດ
13. ລຽງລໍາດັບໃນການປະຕິບັດຕາມຂັ້ນຕອນ
14. ການກ່າວສະລາມ

## 30. ສິ່ງທີ່ເຮັດໃຫ້ເສຍການລະຫມາດ

ສິ່ງທີ່ເຮັດໃຫ້ເສຍການລະຫມາດມີດັ່ງນີ້

1. ການເວົ້າຫຼືເປັ່ງສຽງອອກມາໂດຍບໍ່ໄດ້ກຽວກັບຂໍ້ກໍາໜົດໃນລະຫມາດໂດຍເຈດຕະນາ
2. ການເຄື່ອນໄຫວຫຼາຍຈົນເກີນໄປ ຫຼືເຮັດສິ່ງອື່ນທີ່ບໍ່ກຽວກັບການລະຫມາດໂດຍເຈດຕະນາ
3. ການທີ່ບໍ່ໄດ້ປະຕິບັດຕາມເງື່ອນໄຂ ຫຼື ຣຸກົນຂອງການລະຫມາດ
4. ການມີຫະດັຊ (ສິ່ງສົກກະປົກ)
5. ການກິນ ຫຼື ດື່ມໂດຍເຈດຕະນາ
6. ການຕັ້ງໃຈເລີກລະຫມາດ
7. ການບໍ່ຢຸດນິ່ງນ້ອຍໜຶ່ງຂະນະ ຣຸກູອ(ກົ້ມ), ຂະນະເງີຍສີສະຂຶ້ນສຸຢູດ, ຫຼື ຂະນະນັ່ງສອງສຸຢູດ
8. ການຫັນໜ້າອີກອອກຈາກທິດຕະເວັນຕົກໂດຍເຈດຕະນາ

9. ການເປີດເຜີຍ “ເອົາເຣາະຫ໌” (ສ່ວນທີ່ຕ້ອງປົກປິດຂອງ ຮ່າງກາຍ)
10. ການຕົກມຸຣຕັດ (ຫລຸດພົ້ນຈາກສາສະໜາ)

## 31. ລະຫມາດສຸນັດຕ່າງໆ

ໝາຍເຖິງລະຫມາດສຸນັດທີ່ທ່ານນາບີ (ຊັລລັລລໍຫຸ ຯ) ເຮັດເປັນປະຈໍາ ຫຼືບາງຄັ້ງບໍ່ທັນເຮັດກໍ່ບໍ່ໄດ້ເປັນຍັງ ຕາມຄວາມສະມັກໃຈຜົນລະບຸນຂອງການລະຫມາດສຸນັດນັ້ນມີຫລາກຫຼາຍ ດັ່ງນີ້

### 1. ການລະຫມາດສຸນັດຣໍວາຕິບກ່ອນແລະຫຼັງການລະຫມາດຟັຣດູ

- ລະຫມາດສຸນັດກ່ອນສຸບຮີ 2 ຣໍກະອັດ
- ລະຫມາດສຸນັດກ່ອນຊຸຫ໌ຣີ 2 ຣໍກະອັດ ຫຼື 4 ຣໍກະອັດ
- ລະຫມາດສຸນັດຫຼັງຊຸຫຣີ 2 ຣໍກະອັດ
- ລະຫມາດສຸນັດກ່ອນອັສຣີ 2 ຣໍກະອັດ
- ລະຫມາດສຸນັດຫຼັງມັກຣິບ 2 ຣໍກະອັດ
- ລະຫມາດສຸນັດຫຼັງອິຊາ 2 ຣໍກະອັດ

ລວມເປັນ 12 ຣໍກະອັດ

### 2. ການລະຫມາດສຸນັດຕ່າງໆ (ຕາມຄວາມປາດຖະນາ)

ນອກຈາກນະມາຊ (ລະຫມາດ) ຣໍວາຕິບ ເຊິ່ງເປັນນະມາຊກ່ອນຫຼືຫຼັງນະມາຊຟັຣດູແລ້ວ ຍັງມີນະມາຊສຸນັດຕ່າງໆຫຼາຍຊະນິດ ເຊັ່ນ

1. **ລະຫມາດຕະຫິຍະຕຸລມັສຍິດ** ຄືລະຫມາດສຸນັດ 2 ຣົກະອັດ ເພື່ອການໃຫ້ກຽດມັສຍິດເມື່ອຕອນເຮົາໄປໃນມັສຍິດກ່ອນຈະນັ່ງ
2. **ລະຫມາດດຸຮາ** ຄືລະຫມາດສຸນັດຍາມເຊົ້າ 2-8 ຣົກະອັດ ກຳໜົດເວລາຕັ້ງແຕ່ແສງຕະເວັ່ນຂຶ້ນຈົນຮອດເວລາສ່ວຍ
3. **ລະຫມາດອິສຕິຄໍເຣາະຫ໌** ຄືລະຫມາດສຸນັດ 2 ຣົກະອັດ ຢາມທີ່ເຮົາມີຄວາມທຸກຕ້ອງການທາງເລືອກຕັດສິນໃຈຈາກພຣະຜູ້ເປັນເຈົ້າ
4. **ລະຫມາດຕະຫັດຍຸດ** ຄືລະຫມາດສຸນັດຢາມຄ່ຳຄືນ 2-8 ຣົກະອັດເປັນລະຫມາດທີ່ສຳຄັນຫາກສາມາດປະຕິບັດໄດ້ເປັນປະຈຳ ເວລາທີ່ດີສຸດຄືຂະນະທີ່ຜູ້ຄົນນອນຫຼັບສະນິດ ແລະອັລລໍຫ໌ຈະຕອບຮັບດຸອາຫາກເຮົາຂໍໃຫ້ຊ່ວງເວລານີ້
5. **ລະຫມາດວິຕິຣ** ຄືລະຫມາດເປັນຈຳນວນຄີ່ 1-3-5-7 ຣົກະອັດນິຍົມປະຕິບັດຫຼັງລະຫມາດຕະຫັດຍຸດ ລະຫມາດເປັນລະຫມາດທີ່ຖືວ່າສຳຄັນເຊັ່ນດຽວກັນ
6. **ລະຫມາດອີດທັ້ງສອງ** ຄືລະຫມາດອີດິລຟິດຣີ ແລະ ລະຫມາດອີດິລອັດຫາ 2 ຣົກະອັດ "ລະຫມາດອີດິລຟິດຣີ ຄືລະຫມາດສຸນັດຫຼັງຈາກທີ່ພີ່ນ້ອງມຸສລິມທົ່ວໂລກພາກັນຖືສິນອົດເສັດສິ້ນເພື່ອສະເລີ່ມສະລອງໃຫ້ວັນນັ້ນ"  ແລະ "ລະຫມາດອີດິລອັດຫາ ເປັນລະຫມາດທີ່ພີ່ນ້ອງມຸສລິມສ່ວນໜຶ່ງພາກັນໄປເຮັດພິທີຫັດທີ່ເມືອງມັກກະຫ໌ ແລະ ຢ່າງໜຶ່ງທີ່ສຳຄັນຄືການຂ້າງົວເພື່ອແຈກຈ່າຍຊີ້ນໃຫ້ພີ່ນ້ອງທີ່ທຸກຍາກໃນວັນນັ້ນ"

### 32. ຊະກາດແມ່ນຍັງ? ໃຜແດ່ທີ່ມີສິດໄດ້ຮັບ?

ຊະກາດ ຄືສັບສິນສ່ວນໜຶ່ງທີ່ມຸສລິມຈະຕ້ອງຈ່າຍໃຫ້ແກ່ຜູ້ມີສິດໄດ້ຮັບຊະກາດ ຫາກມີເງິນຄົບກຳໜົດຕາມສາສະໜາໄດ້ວາງເອົາໄວ້ ຜູ້ມີສິດໄດ້ຮັບຊະກາດແບ່ງໄດ້ 8 ພວກໄດ້ແກ່

**1 ຄົນຍາກຈົນ** (ພາສາອາຣັບ "ຟາກີຣ") ຜູ້ມີລາຍໄດ້ນ້ອຍບໍ່ພຽງພໍກັບການດຳລົງຊີວິດ

**2 ຄົນຂັດສົນ** (ພາສາອາຣັບ "ມິສກີນ") ຜູ້ມີລາຍໄດ້ຫຼາຍກວ່າຜູ້ຍາກຈົນແຕ່ຍັງບໍ່ພຽງພໍໃນການລຽງດູຄອບຄົວ

**3 ຜູ້ຈັດການຊະກາດ** (ພາສາອາຣັບ "ອາມີລ") ເຊິ່ງເປັນຜູ້ ເຮັດໜ້າທີ່ການຈັດເກັບຮວບຮວມ ບັນທຶກແຈກຈ່າຍຊະກາດແກ່ຜູ້ມີສິດ

**4 ອຸອັລລັຟ** ຜູ້ທີ່ເຂົ້າຮັບສາສະໜາອິສລາມໃຫມ່ໆ ຫຼື ຜູ້ທີ່ສົນໃຈຈະເຂົ້າຮັບສາສະໜາອິສລາມ

**5 ໃຊ້ໃນການໄຖ່ທາສ** (ຄົນຮັບໃຊ້)

**6 ໃຫ້ແກ່ຜູ້ມີຫນີ້ສິນລົ້ນພົ້ນໂຕ** ຄືມີຫນີ້ສິນໃນຫົນທາງທີ່ສຸດຈະລິດ ຖືກຕາມກົດໝາຍ (ບໍ່ແມ່ນວ່າມີຫນີ້ສິນ ແຕ່ຫນີ້ສິນນັ້ນເປັນສິ່ງບໍ່ດີ ຜິດກົດໝາຍບ້ານເມືອງ ຄົນໆນີ້ກໍ່ບໍ່ມີສິດໄດ້ຮັບ)

**7 ໃຊ້ໃນຫົນທາງຂອງອັລລໍຫ໌ ຟີສະບີລລິລລາຫ໌** ເຊັ່ນໃນການສົງຄາມ ຫຼື ການທາງເຜີຍແຜ່ສາສະໜາອິສລາມ

**8 ຜູ້ທີ່ເດີນທາງ** (ນັກຮຽນ, ນັກສຶກສາ, ຜູ້ທີ່ເດີນທາງໄກຕ້ອງການຄວາມຊ່ວຍເຫລືອ) **ສິ່ງທີ່ສາມາດຈ່າຍເປັນຊະກາດ ໄດ້ແກ່ ເງິນ ແລະ ເຂົ້າສານອາຫານແຫ້ງ**

### 33. ການຖືສິນອົດ (ບວດ) ແມ່ນຍັງ?

ການຖືສິນອົດ ຄືການງົດເວັ້ນອາຫານການກິນ ການດື່ມ ການມີເພດສັມພັນ ຕັ້ງແຕ່ແສງຕະເວັນຂຶ້ນຈົນຮອດດວງຕະເວັນລັບຂອບຟ້າ ເພື່ອເປັນການພັກດີຕໍ່ພຣະອົງອັລລໍຫ໌ ຊຸບຫານະຮູ ວະຈາ ອາລາ (ຊບ.)

**- ກົດໃນການຖືສິນອົດ ມີ 2 ປະການຄື**

1. ຕັ້ງເຈດຕະນາຖືສິນອົດເພື່ອອັລລໍຫ໌ ຊຸບຫານະຮູ ວາຕາອະລາ

2. ງົດເວັ້ນອາຫານການກິນ ການດື່ມ ການມີເພດສັມພັນ ຕັ້ງແຕ່ແສງຕະເວັນຂຶ້ນຈົນຮອດດວງຕະເວັນລັບຂອບຟ້າ

**- ຂໍ້ຄວນປະຕິບັດໃນການຖືສິນອົດ**

1. ໃຫ້ຮັບປະທານອາຫານສູຫູຣ (ອາຫານເຊົ້າ) ໂດຍໃຫ້ກິນໃນເວລາທີ່ ໃກ້ຈະໝົດເວລາຂອງການກິນອາຫານເຊົ້າ
2. ໃຫ້ຮີບແກ້ສິນອົດ(ບວດ) ເມື່ອຮອດເວລາ ດ້ວຍອິນທາພະລັມ ແລະນ້ຳລ່າໆ
3. ງົດເວັ້ນການນິນທາ ດ່າຄົນອື່ນ ການເວົ້າຂີ້ຕວະ ຫຼືສິ່ງບໍ່ມີສາລະ ການບົ່ນ
4. ອ່ານອັລກຸຣອານຫຼາຍໆ
5. ລະຫມາດຕະຣໍວຽະຫ໌ ໃນຄໍ່າຄືນ (ລະຫມາດນີ້ມີສະເພາະຊ່ວງເດືອນຣໍມດອນເດືອນຖືສິນອົດເທົ່ານັ້ນ)
6. ອຽະຕິກາຟ ສິບຄືນສຸດທ້າຍຂອງຣໍມະດອນ (ຄືການປະຕິບັດຄວາມດີໃນມັສຍິດບໍ່ໄປໃສ່ ຫຼືເຮັດສິ່ງໃດ ຫາກບໍ່ຈະເປັນ)

7. ປະຕິບັດຄວາມດີຕ່າງໆ ໃຫ້ຫຼາຍໆ ເຊັ່ນການລະຫມາດ ການຊິກຣຸລລໍຫ໌ (ລໍາລຶກເຖິງອັລລໍຫ໌) ການສໍດາເກາະ (ບໍລິຈາກ)

- **ສິ່ງໃດທີ່ເຮັດໃຫ້ການຖືສິນອົດເສັຍ?**

- ກິນ ຫຼື ດື່ມໂດຍເຈດຕະນາໃນເວລາທີ່ກໍາໜົດໃຫ້ຖືສິນອົດ
- ເຈດຕະນາເຮັດໃຫ້ຫາກ
- ເຈດຕະນາເຮັດໃຫ້ນໍ້າອະສຸຈິອອກມາໂດຍວິທີໃດໆກໍ່ຕາມ
- ມີເລືອດປະຈໍາເດືອນ ຫຼືເລືອດຫຼັງຈາກເກີດລູກ
- ເສຍສະຕິ ເປັນລົມ ຫຼືບໍ່ຮູ້ຈັກຄວາມຮັບຜິດຊອບ
- ເອົາສິ່ງໃດໆເຂົ້າໄປໃນອະໄວຍະວະລຶກເກີນໄປ ເຊັ່ນ ປາກ ຫູດັງ
- ຕົກມຸຣຕັດ (ຕົກສາສະໜາອິສລາມ)

- **ການຖືສິນອົດສຸນັດຕ່າງໆທີ່ສໍາຄັນ**

✓ ການຖືສິນອົດມື້ຕໍ່ມື້ ແບບທ່ານນາບີ ດາວູດ (ອະໄລຫິສລາມ)
✓ ວັນທີ່ 9 ແລະ 10 ເດືອນມຸຫັຣຣອມ
✓ ຖືສິນອົດ 6 ມື້ ໃນເດືອນເຊົາວັລ
✓ ວັນອະຣໍຟະຫ໌ຄືວັນທີ່ 9 – 10- 11 ເດືອນຊຸລຫິດຈະຫ
✓ ວັນຈັນ-ວັນພະຫັດ ຂອງທຸກອະທິດ
✓ ວັນທີ່ 13-14-15 ຂອງທຸກເດືອນອາຣັບ

- **ວັນທີ່ຫ້າມຫ້າມຖືສິນອົດ**

○ ວັນອີດທັ້ງສອງ ວັນອີດຟິດຣີ ແລະ ວັນອີດອັດຫາ
○ ວັນຕັຊຣີກ ຄືວັນທີ່ 11-12-13 ຂອງເດືອນຊຸລຫິດຈະຫ

- ວັນທີ່ສົງໄສວ່າເຂົ້າເດືອນຣໍມະດອນແລ້ວຫຼືບໍ່ ແລະ ວັນທີ່ສົງໄສວ່າເປັນວັນທີ່ 1 ຂອງເດືອນເຊົາວັລ (ວັນອອກອິດຟິດຣິ)
- ວັນສຸກ ແຕ່ຕ້ອງຖືສິນອົດພ້ອມກັນວັນພະຫັດ ວັນສຸກ ວັນເສົາ ສາມວັນເຖິງຈະເຮັດໄດ້
- ການຖືສິນອົດຂ້າມວັນ (ຄືການທີ່ຖືສິນອົດແລ້ວຍັງບໍ່ໄດ້ແກ້ບວດ ກິນເຂົ້າກິນນ້ຳໃນວັນທຳອິດ)
- ຜູ້ຍິງທີ່ຖືສິນອົດສຸນັດໂດຍທີ່ສາມີບໍ່ອະນຸຍາດ (ຫາກຖືສິນອົດຊົດໃຊ້ຫຼືຖືສິນອົດວາຈິບ ບໍ່ຈຳເປັນຕ້ອງຂໍອະນຸຍາດ)

## 34. ຫັຈ

ຫັຈ ໝາຍເຖິງ ການປະຕິບັດອິບາດະຫ໌ຕໍ່ອັລລໍຫ໌ໂດຍມີພິທີກຳສະເພາະ ເຊັ່ນ ການຕໍວາຟບັຍຕຸລລໍຫ໌ ການຢາງສະແອ ການວຸກູຟ ທີທຸ່ງອະຣໍຟະຫ໌ ແລະ ອື່ນໆ

- **ຫັຈ ມີ 3 ປະເພດ ຄື**

1. **ຫັດແບບກິຣອນ** ໝາຍເຖິງຫັດທີ່ຜູ້ປະຕິບັດຫັດໄດ້ໃສ່ຊຸດອຽະຫຣອມ(ໃຊ້ຊຸດຜ້າຂາວ)ໂດຍເຈດຕະນາເຮັດຫັດແລະອຸມເຣາະຫ໌ພ້ອມກັນ ຜູ້ເຮັດຫັດແບບນີ້ຕ້ອງໃສ່ຊຸດອຽະຫ໌ຣອມຕະລອດໄປຈົນສິ້ນສຸດການປະຕິບັດຫັດແລະອຸມເຣາະຫ໌
2. **ຫັດແບບຕະມັດຕົວະອະຫ໌** ໝາຍເຖິງ ຫັດທີ່ຜູ້ປະຕິບັດຫັດໃສ່ຊຸດອຽະຫຣອມໂດນເຈດຕະນາເຮັດອຸມເຣາະຫ໌ກ່ອນຫັດ ຂະນະທີ່ເຂົ້າລະດູຫັດແລ້ວ ເຊິ່ງເລີ່ມຕັ້ງແຕ່ເດືອນເຊົາວັລ ຫຼັງຈາກເສັດອຸມເຣາະຫ໌ກໍ່ປົດອຽະຫຣອມອອກ ແລະຕັ້ງເຈດຕະນາໃຫມ່ແລະໃສ່ຊຸດອຽະຫຣອມໃຫມ່ເຖິງເວລາເຮັດຫັດ

3. **ທັດແບບອິຟຣ້ອດ** ໝາຍເຖິງ ທັດທີ່ຜູ້ປະຕິບັດທັດໃສ່ຊຸດອິຣະຫ໌ຣອມເພື່ອເຮັດທັດແລະຕ້ອງແຕ່ງຊຸດອິຣະຣອມຈົນກວ່າຈະເສັດສິ້ນທັດ ຕໍ່ຈາກນັ້ນຈຶ່ງເຮັດອຸມເຣາະຫ໌

- **ຜູ້ທີ່ວາຈິບຈຳເປັນຕ້ອງປະກອບພິທີທັດ**
    1. ເປັນມຸສລິມ
    2. ມີອາຍຸຄົບຕາມສາສະໜາກຳໜົດ ມີສະຕິປັນຍາດີ
    3. ເປັນຜູ້ມີອິດສະລະ
    4. ມີສັບສິນພຽງພໍແລະມີສຸກພາບດີ
    5. ເສັ້ນທາງໃນການໄປປະກອບພິທີທັດປອດໄພ
- **ຣຸກຸນກົດຂອງການປະກອບພິທີທັດ**
    1. ການໃສ່ຊຸດອິຣະຫ໌ຣອມ ພ້ອມກັບຕັ້ງເຈດຕະນາ
    2. ການວຸກູຟ ທີ່ທົ່ງອະຣໍຟະຫ໌
    3. ການຕໍວາຟບັຍຕຸລລໍຫ໌
    4. ການເດີນສະແອ ລະວ່າງ ພູສໍຟາ ແລະ ມັຣວະຫ໌
    5. ການໂກນຜົມ ຫຼື ຕັດຜົມ
    6. ການລຽງລຳດັບທັງ 5 ຂໍ້
- **ສະຖານທີ່ຄວນໄປຢຽມຢາມເມື່ອໄປປະກອບພິທີທັດ**
    1. **ບັຍຕຸລລໍຫ໌** ແລະມັສຍິດອັລຫະຣອມ ທີ່ເມືອງມັກກະຫ໌ອັລມຸກັຣຣໍມະຫ໌
    2. **ທົ່ງອະຣໍຟະຫ໌** ສະຖານທີ່ພົບກັນຂອງທ່ານນາບີອາດັມກັບພະນາງຫາວາໃນອະດີດ

3. **ມຸຊດະລິຟະຫ໌** ສະຖານທີ່ພັກຄ້າງຄືນຂອງຜູ້ໄປປະກອບພິທີຫັດກ່ອນກັບໄປມີນາ
4. **ກຸ່ມບ້ານມີນາ** ເຊິ່ງເປັນສະຖານທີ່ພັກຄ້າງຄືນຂອງຜູ້ໄປປະກອບພິທີຫັດແລະສະຖານທີ່ໂຍນເສົາຫີນ
5. **ມັສຍິດນະບະວີ** ທີ່ເມືອງມະດີນະຫ໌
6. **ປ່າຊ່າຂອງທ່ານນາບີ** ໃນມັສຍິດນະບະວີ
7. **ປ່າຊາບັນດາສໍຫະບະຫ໌** ຕິດກັບມັສຍິດນະບະວີ
8. **ພູເຂົາອຸຫູດ** ສິງຄາມລະວ່າງມຸສລິມແລະພວກກາຟີຣ
9. **ມັສຍິດກຸບາ** ເປັນມັສຍິດທຳອິດທີ່ທ່ານນາບີສ້າງຂຶ້ນເມື່ອເດີນທາງອົບພະຍົບມາຮອດເມືອງມະດີນະຫ໌
10. **ມັສຍິດກິບລະໄຕນ** ສະຖານທີ່ອັລລໍຫບັນຊາໃຫ້ປ່ຽນທິດຂອງການລະຫມາດ ຈາກແຕ່ກ່ອນຄືຫັນໄປມັສຍິດອັລອັກສໍ ໃຫ້ປ່ຽນມາເປັນບັຍຕຸລລໍຫ໌ທີ່ເມືອງມັກກະຫ໌

- **ຈຸດປະສົງຂອງການປະກອບພິທີຫັດ**

- ເພື່ອເປັນການຮ່ວມໂຕກັນຂອງມະນຸດຊາດທັ້ງໝົດ
- ເພື່ອສະແດງຄວາມເປັນເອກະພາບຂອງປະຊາຊາດອິສລາມ
- ເພື່ອຢ້ອນລຳລຶກເຖິງປະຫວັດສາດຂອງທ່ານນາບີອິບຣໍຫີມ ນາບີອິສມາອີລ ແລະທ່ານນາບີມຸຫັມມັດ (ຊັລລັລລໍຮຸໆ)
- ເພື່ອຝຶກຝົນການເສຍສະລະໃນຫົນທາງຂອງອັລລໍຫ໌
- ເພື່ອທົດສອບ ແລະເສີມສ້າງຄວາມສົມມັດຕະພາບຂອງຮ່າງກາຍແລະຈິດໃຈ
- ເພື່ອຕອບສະໜອງການຮຽກຮ້ອງຂອງອັລລໍຫ໌ໄປປະກອບພິທີຫັດທີ່ບັລຕຸລລໍຫ໌ ຫາກມີຄວາມສາມາດ

# ພາກທີ່ສອງ (2)

# ພື້ນຖານທົ່ວໄປ

**35. ມັສຍິດທີ່ສຳຄັນທີ່ສຸດໃນອິສລາມ**

1. ມັສຍິດອັລຫະຣອມ ທີ່ມະຫານະຄອນມັກກະຫ໌
2. ມັສຍິດອັນນະບະວີ ທີ່ເມືອງມະດີນະຫ໌
3. ມັສຍິດອັລອັກສໍ ທີ່ກຸງເຢລູຊະເລັມ(ອັລກູດສ໌) ປາເລສໄຕນ

**36. ຫຸກົມ 5 ປະການທີ່ເປັນກົດໃນການຕັດສິນ**

1. **ວາຈິບ** ການງານທີ່ຈຳເປັນຕ້ອງປະຕິບັດ ຫາກລະຖິ້ມເທົ່າກັບວ່າມີບາບທີ່ຈະຖືກລົງໂທດ
2. **ສຸນັດ** ການງານທີ່ສະໜັບສະໜຸນໃຫ້ປະຕິບັດ ມີຜົນລະບຸນຕອບແທນ ຫາກລະຖິ້ມກໍ່ບໍ່ມີບາບໃດໆ
3. **ມຸບາຫ໌** ການງານທີ່ຈະເຮັດ ຫຼື ຈະບໍ່ເຮັດກໍ່ໄດ້
4. **ມັກຣູຫ໌** ການງານທີ່ໜ້າກຽດຊັງ ສາມາດເຮັດໄດ້ ແລະ ຖ້າລະຖິ້ມຈະໄດ້ຜົນລະບຸນ
5. **ຫະຣອມ** ການງານທີ່ຈະຕ້ອງລະຖິ້ມ ຫ້າມປະຕິບັດ ຫາກປະຕິບັດຖືວ່າເປັນບາບແລະຖືກລົງໂທດ

**37. ຟັຣດູໄອນ ແລະ ຟັຣດູກິຟາຍະຫ໌**

**ຟັຣດູໄອນ** ໝາຍເຖິງ ສິ່ງທີ່ສາສະໜາບັນຍັດໃຫ້ມຸສລິມທຸກຄົນປະຕິບັດເປັນການສະເພາະບຸກຄົນ ຈະລະຖິ້ມ ຫຼື ໃຫ້ຜູ້ອື່ນປະຕິບັດແທນບໍ່ໄດ້ ເຊັ່ນການລະຫມາດ 5 ເວລາ ການຖືສິນອົດ(ບວດ)ໃນເດືອນຣໍມະດອນ ແລະ ຯລຯ

**ຟັຣດູກິຟາຍະຫ໌** ໝາຍເຖິງສາສະໜາບັນຍັດເອົາໄວ້ໃຫ້ສວນລ່ວມ ຫາກບຸກຄົນໜຶ່ງໃນສັງຄົມນັ້ນປະຕິບັດຄົນໃນສັງຄົມນັ້ນກໍ່ລຸດພົ້ນຈາກບາບໄປດ້ວຍ ເຊັ່ນການຕອບຮັບສະລາມໃຫ້ກຸ່ມຄົນ ການຈັດການຮ່າງຄົນຕາຍຕາມຫພິທີຂອງສາສະໜາ ຯລຯ

## 38. ສິບສອງເດືອນ ອິສລາມ

| | | |
|---|---|---|
| 1. | مُحَرَّم | ມຸຫັຣຣອມ |
| 2. | صَفَّر | ສໍຟັຣ |
| 3. | رَبِيْعُ الْأَوَّل | ຣໍບີອຸລເອົາວັລ |
| 4. | رَبِيْعُ الْأَخِر | ຣໍບີອຸລອາຄີຣ |
| 5. | جَمَادِي الْأَوَّل | ຈະມາດິລເອົາວັລ |
| 6. | جَمَادِي الْأَخِر | ຈະມາດິລອາຄີຣ |
| 7. | رَجَب | ຣໍຈັບ |
| 8. | شَعْبَان | ຊະບານ |
| 9. | رَمَضان | ຣໍມະດອນ |
| 10. | شَوَّال | ເຊົາວັລ |
| 11. | ذُوالْقَعْدَة | ຊຸລກິດດະຫ໌ |
| 12. | ذُوالحِجَّة | ຊຸລຫິດຈະຫ໌ |

## 39. ວັນສຳຄັນໃນສາສະໜາອິສລາມ

- **ວັນທີ 9 ມຸຫັຣຣອມ** ເອີ້ນວ່າ ວັນຕະຊູອາ ມີສຸນັດໃຫ້ຖືສິນອົດ
- **ວັນທີ 10 ມຸຫັຣຣອມ** ເອີ້ນວ່າ ວັນອາຊູຣໍ ມີສຸນັດໃຫ້ຖືສິນອົດ
- **ເດືອນຊະບານທັ້ງເດືອນ** ເປັນເດືອນທີ່ທ່ານນາບີຖືສິນອົດຫຼາຍກວ່າເດືອນອື່ນໆທັ້ງໝົດ ນອກຈາກເດືອນຣໍມະດອນ ແລະເຮົາຄວນປະຕິບັດຕາມສຸນນະຫຂອງທ່ານນາບີ
- **ເດືອນຣໍມະດອນທັ້ງເດືອນ** ເປັນເດືອນແຫ່ງການຖືສິນອົດ

- **10 ຄືນສຸດທ້າຍຂອງເດືອນຣໍມະດອນ** ສຸນນະຫໃຫ້ອຽະຕິກາຟໃນມັສຍິດ
- **ວັນທີ 1 ເຊົາວັລ** ເປັນວັນອີດິລຟິດຣີ ໃຫ້ສະເລີມສະລອງວັນອີດ
- **ເດືອນເຊົາວັລ** ສະນັບສະນຸນໃຫ້ຖືສິນອົດ 6 ມື້
- **ວັນທີ 9 ຊຸລຫິດຈະຫ໌** ເປັນວັນອະຣໍຟະຫ໌ ສຸນນະຫ໌ໃຫ້ຖືສິນອົດ
- **ວັນທີ 10 ຊຸລຫິດຈະຫ໌** ເປັນວັນອີດິລອັດຫາ ໃຫ້ສະເລີມສະລອງວັນອີດ
- **ວັນທີ 11-12-13 ຊຸລຫິດຈະຫ໌** ເປັນວັນຕັຊຣີກ ສະນັບສະນຸນໃຫ້ຂ້າກຸຣບານ(ຂ້າງົວ) ແລະເປັນວັນສະນຸກສະນານຕໍ່ຈາກວັນອີດ

## 40. ສີຄໍລີຟະຫ໌

ຜູ້ນຳທີ່ປົກຄອງຫຼັງຈາກການຈາກໄປຂອງທີ່ທ່ານນາບີມຸຫັມມັດ (ຊັລລັລລໍຫຸຯ) ເອີ້ນວ່າ "ຄໍລີຟະຫ໌"  ຄໍລີຟະຫ໌ຜູ້ຊົງຄຸນນະທຳທັ້ງສີ່ຄົນມີດັ່ງນີ້

1. ທ່ານອາບູບັກ ບິນອາບີກຸຟາຫະຫ໌ ໄດ້ຮັບສາຍານາມວ່າ

"ອັສສິກດິກ" ໝາຍເຖິງ "ຜູ້ມີຄຸນນະທຳ"(ຫ.ສ.11-13 ຫຼ ຄ.ສ.632-634)

2. ທ່ານອູມັຣ ບິນອັລຄອດຕອບ ໄດ້ຮັບສາຍານາມວ່າ "ຟາຣຸກ" (ຫ.ສ.13-24 ຫຼື ຄ.ສ. 634-645)
3. ທ່ານອຸສມານ ບິນອັຟຟານ ໄດ້ຮັບສາຍານາມວ່າ "ອັລກໍນີ" (ຫ.ສ.24-35 ຫຼື ຄ.ສ.645-656)
4. ທ່ານອາລີ ບິນອາບີຕໍລິບ ໄດ້ຮັບສາຍານາມວ່າ "ອັລມຸຣຕະດໍ" (ຫ.ສ. 35-40 ຫຼື ຄ.ສ.656-661)

** "ຫ.ສ. ຄື ຫິດຈະເຣາະຫ໌ສັກກະລາດ" ເປັນການນັບປີຂອງອິສລາມ

** "ຄ.ສ. ຄື ຄິສສັກກະລາດ" ເປັນການນັບປີຂອງຄິສຕຽນ

## 41. ລູກຂອງທ່ານນາບີມຸຫັມມັດ(ຊັລລັລລໍຫຸ)

ລູກຊາຍຂອງທ່ານນາບີມີ 3 ຄົນ

1. ອິບຣໍຫີມ إِبْرَاهِيْم
2. ອັບດຸລລໍຫ໌ عَبْدُ الله
3. ກໍຊິມ قَاسِم

ລູກສາວຂອງທ່ານນາບີມີ 4 ຄົນ

1. ຣຸກັຍຍະຫ໌ رُقَيَّة
2. ອຸມມຸກຶລຊູມ أُمُّ كَلْثُوْم
3. ໄຊນັບ زَيْنَب
4. ຟາຕິມະຫ໌ فَاطِمَة

## 42. ພັນລະຍາຂອງທ່ານນາບີມຸຫັມມັດ(ຊັລລັລລໍຫຸ)

1. ທ່ານນາງຄໍດີຍະຫ໌ خَدِيْجَة بِنتِ خَوِيلِد
2. ທ່ານນາງອາອິຊະຫ໌ عَائِشَة بِنْتِ أَبِي بَكَر
3. ທ່ານນາງເຊົາດະຫ໌ سَوْدَة بِنْتِ زَمْعَة
4. ທ່ານນາງຫັຟເຊາະຫ໌ حَفْصَة بِنْتِ عُمَر
5. ທ່ານນາງໄຊນັບ زَيْنَبْ بِنْتِ خُزَيْمَة

6. ທ່ານນາງອຸມມຸຊະລາມະຫ໌ هَند أُمُّ سَلَمَة بِنْتِ زَاد الرَّكِب
7. ທ່ານນາງຊັຍນັບ ບິນຕິ ຈາຊ زَيْنَبْ بِنْتِ جَحْش
8. ທ່ານນາງຈຸໄວຣິຍະຫ໌ جُوَيْرِيَة بِنْتِ الحَارِث
9. ທ່ານນາງອຸມມຸຫະບີບະຫ໌ أُمُّ حَبِيبَة بِنْتِ أَبِي سُفيَان
10. ທ່ານນາງສໍຟີຍະຫ໌ صَفِيَّة بِنْتِ حيي
11. ທ່ານນາງມັຍມູນະຫ໌ مَيْمُونَة بِنْتِ الحَارِث
12. ທ່ານນາງຣັຍຫານະຫ໌ رَيْحَانَة بِنْتِ زَيْد
13. ທ່ານນາງມາຣິຍະຫ໌ مَارِيَّة القِبطِيَّة أُم إِبْرَاهِيمُ

## 43. ສິບສໍຫາບະຫ໌ ທີ່ໄດ້ຮັບສັນຍານວ່າເປັນຊາວສະຫວັນ

1. ອາບູບະກັຣ ອັສສິດດີກ أَبُوْ بَكَر الصِّدِيْق
2. ອຸມັຣ ບິນອັລຄອດຕອບ عُمَرُ بِن الخَطَاب
3. ອຸສມານ ບິນ ອັຟຟານ عُثمَان بِن عَفَّان
4. ອາລີ ບິນ ອາບີຕໍລິບ عَلِي بِن أَبِي طَالِب
5. ຕໍລຫະຫ ບິນ ອຸບັຍດັລລະຫ طَلحَة بِن عَبْدِ الله
6. ອາບູອຸບັຍດະຫ໌ ບິນ ອັລຈັຣຣອດ أَبُو عُبَيدَة بِن الجَرَاح
7. ຊຸບີຣ ບິນ ເອົາວາມ زُبِيْر بِن عَوَّام
8. ອັບດຸລລໍຫມານ ບິນ ເອົາຟ عَبْدُ الرَّحْمَنْ بِن عَوْف
9. ສະອັດ ບິນ ອາບີວະກອສ سَعَد بِن أَبِي وَقَاص
10. ສະອີດ ບິນ ຊັຍດູ سَعِيْد بِن زَيد

## 44. ມັຊຫັບ ແລະມັຊຫັບອິມ່າມທັ້ງສີ

1. **ມັຊຫັບຫະນະຟີ** ໂດຍ ອິມາມອາບູ ຫະນີຟະຫ ນັວະມານ ບິນຊາບິດ (ຫ.ສ. 80 - 150 ຫຼື ຄ.ສ. 699 - 767)
2. **ມັຊຫັບມາລິກີ** ໂດຍ ອິມາມມາລິກ ບິນ ອານັສ ອັລບາຮີ (ຫ.ສ. 93 – 179 ຫຼື ຄ.ສ. 714 - 798 )
3. **ມັຊຫັບຊາຟີອີ** ໂດຍ ອິມາມ ມຸຫັມມັດ ບິນ ອິດຣີສ ອັຊຊາຟີອີ ( ຫ.ສ. 150 – 204 ຫຼື ຄ.ສ. 767 – 821)
4. **ມັຊຫັບຫັມບະລີ** ໂດຍອິມາມ ອະຫມັດ ບິນ ຫັມບັລ (ຫ.ສ. 164 – 241 ຫຼື ຄ.ສ. 780 – 855)

## 45. ອິມ່າມ ນັກບັນທຶກຫະດີຊ 6 ທ່ານ

1. **ອິມາມບຸກໍຣີ** ຊື່ເຕັມວ່າ ມຸຫັມມັດ ບິນ ອິສມາອີລ ອັລມຸກີເຣາະຫ໌ ( ຫ.ສ. 194 – 256)
2. **ອິມາມມຸສລິມ** ຊື່ເຕັມວ່າ ມຸສລິມ ບິນ ຫັດຈ່າກ ອັລກຸຣ່ອຍຊີ (ຫ.ສ. 204 – 261)
3. **ອິມາມອາບູດາວູດ** ຊື່ເຕັມວ່າ ສຸລັຍມານ ບິນ ອັຊຍາຕ ອັຊຊີຊຕານີ (ຫ.ສ. 202 – 275)
4. **ອິມາມຕິຣມີຊີ** ຊື່ເຕັມວ່າ ມຸຫັມມັດ ບິນ ອີຊາ ອັດຕິຣມີຊີ (ຫ.ສ. 200 – 267)

5. **ອິມາມອັນນະຊາອີ** ຊື່ເຕັມວ່າ ອະຫ໌ມັດ ບິນ ຊຸອັຍບ໌ ອັລຄຸອໍຊານີ ອັລນະຊາອີ (ຫ.ສ. 215 – 303)
6. **ອິມາມມຸມາຈະຫ໌** ຊື່ເຕັມວ່າ ມຸຫັມມັດ ບິນ ຍະຊີດ ອັລກ໊ອສວັຍນີ (ຫ.ສ. 207 – 273)

46. **ຜູ້ຍິງທີ່ປະເສີດທີ່ສຸດ 4 ທ່ານ**

1. ທ່ານນາງອາຊີຍະຫ أَسِيَّة ເມັຍຂອງຟີຣອູນ
2. ທ່ານນາງມັຣຍັມ مَرْيَم ແມ່ຂອງທ່ານນາບີອີຊາ
3. ທ່ານນາງຄໍດີຍະຫ໌ خَدِيْجَة ເມັຍຂອງທ່ານນາບີມູຫັມມັດ
4. ທ່ານນາງຟາຕີມະຫ໌ فَاطِمَة ລູກສາວຂອງທ່ານນະບີ

## 47. ກຸສົນຜົນລະບຸນຂອງຜູ້ຕາຍຊະຫີດ 7 ປະການ (ຄົນຕາຍໃນຫົນທາງຂອງອັລລໍຫ໌)

- ✓ ລາວຈະໄດ້ຮັບການອະໄພຍະໂທດຕັ້ງແຕ່ການຫລັ່ງຂອງເລືອດຢົດທໍາອິດ
- ✓ ອັລລໍຫ໌ (ຊ.ບ) ຈະໃຫ້ລາວເຫັນຕໍາແໜ່ງຂອງລາວໃນສະຫວັນ
- ✓ ລາວຈະໄດ້ຮັບການປະຄັບປະຄອງດ້ວຍອາພອນແຫ່ງການສັດທາ
- ✓ ລາວຈະໄດ້ແຕ່ງງານກັບຫູຣຸນອີນ (ສາວສະຫວັນ) ເຖິງ 72 ຄົນ
- ✓ ລາວຈະລອດພົ້ນຈາກການລົງໂທດໃນລູມຝັງສົບ ແລະລອດພົ້ນຈາກຄວາມໂຫດຫຽມຂອງວັນກິຍາມະຫ໌

- ✓ ລາວຈະໄດ້ສວມໃສ່ມົງກຸດແຫ່ງຄວາມສັນລະເສີນບົນສີສະ ເຊິ່ງເມັດທັບທິມເມັດໜຶ່ງຂອງມົງກຸດນັ້ນປະເສີດກວ່າໂລກດຸນຍານີ້ອີກ ແລະ ສິ່ງທີ່ມີຢູ່ໃນໂລກນີ້ທັ້ງໝົດ
- ✓ ລາວມີສິດຊ່ວຍເຫຼືອພີ່ນ້ອງ(ຊາຟາອະຫ໌)ຈຳນວນ 70 ຄົນ

## 48. ເຈັດ ບຸກຄົນທີ່ຢູ່ໃຕ້ຮົ່ມເງົາບັນລັງຂອງອັລລໍຫໃນວັນກິຍາມະຫ໌

1. ອີມ່າມ (ຜູ້ນຳ) ທີ່ຢຸດຕິທຳ
2. ຊາຍໜຸ່ມທີ່ເຕີບໂຕມາພ້ອມກັບການອີບາດະຫຕໍ່ອັລລໍຫ
3. ຊາຍໜຸ່ມທີ່ຫົວໃຈຂອງລາວຜູກພັນຢູ່ກັບມັສຍິດ
4. ຊາຍສອງຄົນທີ່ຮັກກັນເພື່ອອັລລໍຫ໌ (ຊ.ບ) ພວກເຂົາເຈົ້າຢູ່ຮ່ວມກັນເພື່ອອັລລໍຫ໌ ແລະຈາກກັນເພື່ອອັລລໍຫ໌
5. ຊາຍທີ່ມີຜູ້ຍິງພຽບພ້ອມທັ້ງຕຳແໜ່ງ ຖານະ ແລະຄວາມງາມມາເຊີນຊວນໃຫ້ລາວເຮັດຊີນາ ແຕ່ລາວກັບກ່າວວ່າ!! **“ແທ້ຈິງຂ້ອຍຢ້ານອັລລໍຫ໌”**
6. ຊາຍທີ່ບໍລິຈາກຢ່າງລຶກລັບຈົນເຮັດໃຫ້ມືຊ້າຍຂອງລາວບໍ່ຮູ້ວ່າມືຂວາບໍລິຈາກໄປດ້ວຍອີກລາສ
7. ຊາຍທີ່ລຳລຶກເຖິງອັລລໍຫ໌ຂະນະຢູ່ຄົນດຽວ ແລ້ວນ້ຳຕາກໍ່ໄຫລອອກມາດ້ວຍຄວາມຢ້ານຕໍ່ອັລລໍຫ໌

ບັນທຶກໂດຍບຸກຄໍຣີແລະມຸສລິມ

## 49. ການງານທີ່ຈະຊ່ວຍເຫຼືອມະນຸດໃນວັນກີຍາມະຫ໌

- ການປະຕິບັດດີຕໍ່ພໍ່ແມ່
- ການອາບນໍ້າລະຫມາດ
- ການຊິກີຣ ລໍາລຶກເຖິງອັລລໍຫ໌
- ການລະຫມາດ
- ການຖືສິນອົດ
- ການປະກອບພິທີຫັດ ແລະ ອຸມເຣາະຫ໌
- ການເຊື່ອມຄວາມສັມພັນກັບພີ່ນ້ອງ
- ການບໍລິຈາກທານ
- ການປະຕິບັດຕາມຄໍາສັ່ງໃຊ້ແລະອອກຫ່າງສິ່ງຕ້ອງຫ້າມ
- ຄວາມປະພຶດທີ່ດີງາມ
- ຄວາມຢ້ານກົວຕໍ່ອັລລໍຫ໌
- ການປະຕິບັດຕາມແນວທາງຂອງທ່ານຣໍສູລ(ຊັລລັລລໍຫຯ)
- ນໍ້າຕາທີ່ຫຼັ່ງອອກມາເນື່ອງຈາກຄວາມຍໍາເກງຕໍ່ອັລລໍຫ໌
- ການສໍລາວາດຕໍ່ທ່ານນາບີ (ຊັລລັລລໍຫຯ)
- ການກ່າວຄໍາປະຕິຍານຕົນ (ຊະຫາດະຫ໌)

## 50. ຫ້າ ປະການທີ່ມຸສລິມປະຕິບັດແລ້ວ ຈະໄດ້ຮັບຄວາມຫາຍະນະ

- ເມື່ອການເຮັດຊີນາ (ຜິດປະເວນີ)ແຜ່ຫຼາຍ ຈະມີໂລກໄຂ້ທີ່ບໍ່ເຄີຍເຫັນມາກ່ອນໃນອະດີດຈະລະບາດໄປທົ່ວ
- ເມື່ອມີການໂກງຕາຊັ່ງ ຄວາມແຫ້ງແລ້ງຈະເກີດຂຶ້ນ
- ເມື່ອບໍ່ມີການຈ່າຍຊະກາດ ຝົນຈະບໍ່ຕົກຕາມລະດູ
- ເມື່ອມີການຜິດສັນສາຕໍ່ອັລລໍຫ໌ ແລະຣໍສູລຂອງພຣະອົງ ອັລລໍຫ໌ (ຊ.ບ) ຈະໃຫ້ສັດຕູມີອຳນາດຫຼາຍກວ່າພວກລາວ
- ເມື່ອບໍ່ມີການຕັດສິນໂດຍບົດບັນຍັດຈາກອັລລໍຫ໌ ພຣະອົງຈະເຮັດໃຫ້ເກີດຄວາມທຸກຍາກລຳບາກໃນໝູ່ພວກລາວ

## 51. ອີມານ 77 ຂະແໜງ

1. ການສັດທາວ່າອັລລໍຫ໌ຊົງເອກະ
2. ການສັດທາຕໍ່ບັນດາມະລາອິກະຫ໌
3. ການສັດທາຕໍ່ບັນດາຄຳພີ
4. ການສັດທາຕໍ່ບັນດາຣໍສູລ
5. ການສັດທາຕໍ່ວັນອາຄິເຣາະຫ໌
6. ການສັດທາວ່າອັລລໍຫ໌ ຈະຊົງຟື້ນຄືນຊີບແກ່ຜູ້ທີ່ຕາຍໄປແລ້ວທັ້ງໝົດ
7. ການສັດທາກໍດໍ່ ກໍດັຣ
8. ການສັດທາວ່າຫຼັງຈາກຟື້ນຄືນຊີບແລ້ວ ສັບພະສິ່ງທັງໝົດຈະຖືກນຳໄປລວມກັນທີ່ທຸ່ງມະຫ໌ຊັຣ
9. ການສັດທາວ່າສະຫວັນເປັນທີ່ພຳນັກຕະລອດການຂອງຜູ້ສັດທາ

10. ການສັດທາວ່າອັລລໍຫ໌ ພ້ອມປະຕິບັດຕາມທຸກຄຳບັນຊາ
11. ການຢ້ານກົວຕໍ່ການລົງໂທດຂອງອັລລໍຫ໌
12. ການມຸ່ງຫວັງຄວາມເມດຕາຈາກອັລລໍຫ
13. ການມອບໝາຍຕໍ່ອັລລໍຫ໌
14. ການຮັກຕໍ່ທ່ານນາບີມຸຫັມມັດ (ຊັລລັລໍຮຸຯ)
15. ການໃຫ້ກຽດແລະສັນລະເສີນ ທ່ານນາບີມຸຫັມມັດ (ຊັລລັລໍຮຸຯ)
16. ການຢຶດໝັ້ນໃນອິສລາມດ້ວຍການຍອມພ້ອມຕາຍເພື່ອສາສະໜາ
17. ການສະແວງຫາຄວາມຮູ້
18. ການຖ່າຍທອດຄວາມຮູ້ສາສະໜາໃຫ້ຜູ້ອື່ນ
19. ການໃຫ້ກຽດຕໍ່ອັລກຸຣອານ
20. ຄວາມສະອາດທັ້ງພາຍນອກແລະພາຍໃນ
21. ດຳລົງການລະຫມາດມີລະ ຫ້າເວລາ
22. ການຈ່າຍຊະກາດ
23. ການຖືສິນອົດໃນເດືອນຣໍມະດອນ
24. ການອຽະຕິກາຟ
25. ການເດີນທາງໄປປະກອບພິທີຫັດ
26. ການຈີຫາດ(ຕໍ່ສູ້ເພື່ອສາສະໜາ)
27. ການປົກປ້ອງຮັກສາພີ່ນ້ອງມຸສລິມ
28. ການມີຄວາມໝັ້ງຄົງແລະອົດທົນໃນການຕໍ່ສູ້ເພື່ອສາສະໜາ
29. ການມອບເສດໜຶ່ງສ່ວນຫ້າຂອງສັບສິນທີ່ໄດ້ຮັບຈາກສົງຄາມໃຫ້ແກ່ຜູ້ນຳເພື່ອໄປແຈກຈ່າຍແກ່ຄອບຄົວຜູ້ເສຍຊີວິດ
30. ການປົດປ່ອຍທາສໃຫ້ເປັນອິສລະ

31. ການເສຍຄ່າປັບໃໝ່
32. ການຮັກສາສັນຍາ
33. ການຂອບໃຈຕໍ່ອັລລໍຫ໌
34. ການຮັກສາລີ້ນ
35. ການຮັກສາອະໄວຍະວະເພດ
36. ການດູແລຮັກສາ ມອບໝາຍອະມານະຫ໌ ແລະຄວາມໄວ້ວາງໃຈ ໃຫ້ແກ່ຜູ້ທີ່ເໝາະສົມ
37. ການລະເວັ້ນການຂ້າພີ່ນ້ອງມຸສລິມ
38. ການປົກປ້ອງຕົວເອງຈາກອາຫານເຄື່ອງດື່ມທີ່ຫະຣອມ
39. ການອອກຫ່າງຈາກສັບສິນທີ່ຫະຣອມ
40. ການຮັກສາຕົວເອງບໍ່ສ່ວມເສື້ອຜ້າເຄື່ອງປະດັບທີ່ຫະຣອມ
41. ການອອກຫ່າງຈາກການລະຫລິ້ນທີ່ສາສະໜາຫ້າມ
42. ການໃຊ້ຊີວິດສາມະຖະບໍ່ຟຸ່ມເຟືອຍ
43. ການອອກຫ່າງຈາກການອິດຊາ
44. ການອອກຫ່າງຈາກການດ່າຜູ້ອື່ນ ຕຳນິມຸສລິມ ບໍ່ຕໍ່ໜ້າ ຫຼືລັບຫຼັງ
45. ຄວາມອິກລາສ ບໍລິສຸດໃຈ
46. ມີຄວາມຍິນດີທີ່ໄດ້ເຮັດອິບາດະຫ໌ ແລະບໍ່ມີຄວາມສຸກຫາກບໍ່ໄດ້ ປະຕິບັດຄວາມດີ
47. ເຕົາບັດໂຕຫຼັງຈາກເຮັດຄວາມຜິດໄປແລ້ວ
48. ການຂ້າສັດເຮັດກຸຣບານແລະອະກີເກາະ
49. ການຕໍອັດ ເຊື່ອຟັງຜູ້ນຳຫຼືຜູ້ປົກຄອງ
50. ການຍຶດໝັ້ນໃນສາຍເຊືອກດຽວກັນ ມີຄວາມສະມັກຄີ
51. ການຕັດສິນດ້ວຍຄວາມຍຸດຕິທຳ

52. ການສົ່ງເສີມໃຫ້ປະຕິບັດຄວາມດີ ແລະຍັບຍັ້ງຄວາມຊົ່ວ
53. ການຊ່ວຍເຫຼືອກັນໃນການເຮັດຄວາມດີ
54. ການມີຄວາມລະອາຍຕໍ່ອັລລໍຫ໌
55. ການປະຕິບັດດີຕໍ່ພໍ່ແມ່
56. ການເຊື່ອມຄວາມສໍາພັນກັນພີ່ນ້ອງ
57. ການມີມາລະຍາດທີ່ດີງາມ
58. ການເຮັດດີນໍາຄົນຮັບໃຊ້ ຫຼືຜູ້ຢູ່ໃນການປົກຄອງຂອງເຮົາ
59. ການທີ່ລູກນ້ອງມີຄວາມຈົງຮັກພັກດີຕໍ່ຫົວໜ້າ
60. ການຮັກສາສິດຂອງຄູ່ຮ່ວມຊີວິດ
61. ການຮັກເຊິ່ງກັນແລະກັນລະວ່າງພີ່ນ້ອງມຸສລິມ
62. ການຕອບຮັບສະລາມຂອງພີ່ນ້ອງ
63. ການຢ້ຽມຢາມຜູ້ບໍ່ສະບາຍ
64. ການລະຫມາດຍັນນາຊະຫ໌ໃຫ້ແກ່ຜູ້ເສຍຊີວິດ
65. ການຂໍດູອາໃຫ້ແກ່ພີ່ນ້ອງທີ່ຈາມ
66. ການອອກຫ່າງຈາກຄົນທີ່ມັກສ້າງຄວາມເສຍຫາຍ
67. ການໃຫ້ກຽດເພື່ອນບ້ານ
68. ການໃຫ້ກຽດແກ່ແຂກທີ່ມາຢ້ຽມຢາມ
69. ການປົກປິດຄວາມຜິດພາດຂອງພີ່ນ້ອງມຸສລິມ
70. ການອົດທົນ
71. ການໃຊ້ຊີວິດຢ່າງພໍພຽງ
72. ຄວາມຫຶງຫ່ວງໃນທາງທີ່ຖືກຕ້ອງ ເຊັ່ນຫຶງຫ່ວງເມຍບໍ່ໃຫ້ເຮັດຜິດ
73. ການອອກຫ່າງຈາກຄໍາເວົ້າທີ່ບໍ່ມີປະໂຫຍດ

74. ການມີໃຈບຸນ ໃຈກວ້າງ

75. ການໃຫ້ກຽດແກ່ ຜູ້ອາວຸໂສ ແລະການຮັກເດັກນ້ອຍ

76. ການໄກ່ເກ່ຍ ປະໜີປະນອມລະວ່າງພີ່ນ້ອງມຸສລິມທີ່ຜິດຖຽ້ງກັນ

77. ການໃຫ້ສິ່ງໃດສິ່ງໜຶ່ງຈາກສິ່ງທີ່ໂຕເອງຮັກໃຫ້ແກ່ຜູ້ອື່ນ

## 52. ສີ່ ປະການ ການເລືອກຜູ້ຍິງທີ່ຄູ່ຄວນແກ່ການແຕ່ງງານ

1. ດ້ວຍສາສະໜາຂອງນາງ
2. ດ້ວຍຄວາມສວຍງາມຂອງນາງ
3. ດ້ວຍຕະກູນຂອງນາງ
4. ດ້ວຍຄວາມລ່ຳລວຍຂອງນາງ

ແລະ ທ່ານນາບີ(ຊັລລັລລໍຫ) ກໍ່ສະນັບສະນຸນໃຫ້ເລືອກຜູ້ຍິງທີ່ມີ **ສາສະໜາ** ເປັນສິ່ງສຳຄັນ

## 53. ສີ່ຄຳຖາມ ໃນວັນກິຍາມະຫ໌

1. ອາຍຸຂອງເຈົ້າ ເຈົ້າໃຊ້ມັນແນວໃດ
2. ໄວໜຸ່ມຂອງເຈົ້າ ເຈົ້າໃຊ້ມັນແນວໃດ
3. ຄວາມຮູ້ທີ່ໄດ້ມາ ເຈົ້າໃຊ້ມັນແນວໃດ
4. ສັບສິນທີ່ໄດ້ມາ ເຈົ້າໄດ້ມາແນວໃດ ແລະຈ່າຍມັນໄປແນວໃດ

## 54. ສາມປະການ ທີ່ຜູ້ຕາຍຈະໄດ້ຮັບຜົນບະບຸນຕະຫຼອດ

1. ການເຮັດທານສາທາລະລະກຸສົນ (ອະກັຟຈະຣິຍະຫ໌ ບໍລິຈາກເພື່ອສ່ວນລວມ ແລະເປັນປະໂຫຍດ ເຊັ່ນການ ສ້າງມັສຍິດ ການຂຸດບໍນໍ້າ ການສ້າງຖະນົນ ແລະ ລຯລ)
2. ລູກສໍລິຫ໌ (ລູກທີ່ດີ) ທີ່ວິງວອນຂໍດູອາໃຫ້ພໍ່ແມ່
3. ຄວາມຮູ້ທີ່ເຄີຍສັ່ງສອນ ແລະເປັນປະໂຫຍດຕໍ່ຜູ້ອື່ນ

## 55. ຄວາມໝາຍຂອງການອິຈຈະເຣາະຫ໌ (ອົບພະຍົບ) 5 ປະການ

1. ການອົບພະຍົບຈາກປະເທດທີ່ເຮັດສົງຄາມກັບມຸສລິມໄປສູ່ ປະເທດມຸສລິມ
2. ການອົບພະຍົບອອກຈາກດິນແດນທີ່ເຮັດ “ບິດອະຫ໌” ໄປສູ່ ດິນແດນທີ່ເປັນສຸນນະຫ໌ ຖືກຕ້ອງຕາມແນວທາງຂອງທ່ານນາບີ
3. ການອົບພະຍົບອອກຈາກດິນແດນທີ່ເຕັມໄປດ້ວຍສິ່ງຕ້ອງຫ້າມ ເພື່ອສະແວ່ງແນວທາງທີ່ອະນຸມັດ
4. ການອົບພະຍົບອອກຈາກສິ່ງທີ່ເປັນອັນຕະລາຍແກ່ຕົນເອງ
5. ການອົບພະຍົບອອກໄປເພາະຢ້ານອັນຕະລາຍຈະຄຸກຄາມສັບສິນ ຢ້ານວ່າຈະບໍ່ປອດໄພ

## 56. ຈົ່ງຊ່ວງຊີງ 5 ຢ່າງກ່ອນ 5 ຢ່າງຈະມາເຖິງ

1. ຈົ່ງເຮັດຄວາມດີໃນຂະນະທີ່ **ຍັງເປັນໜຸ່ມ ກ່ອນຄວາມແກ່ຊາລາຈະມາເຖິງ**
2. ຈົ່ງເຮັດຄວາມດີໃນຂະນະທີ່ **ຍັງມີສຸກພາບທີ່ດີ ກ່ອນການປ່ວຍໄຂ້ຈະມາເຖິງ**
3. ຈົ່ງເຮັດຄວາມດີໃນຂະນະທີ່ **ຍັງຮັ່ງມີ ກ່ອນຄວາມຍາກຈົນຈະມາເຖິງ**
4. ຈົ່ງເຮັດຄວາມດີໃນຂະນະທີ່ **ມີເວລາວ່າງ ກ່ອນທີ່ຄວາມວຸ່ນວາຍຈະມາເຖິງ**
5. ຈົ່ງເຮັດຄວາມດີໃນຂະນະທີ່**ຍັງມີຊີວິດ ກ່ອນຄວາມຕາຍຈະມາເຖິງ**

(ບັນທຶກໂດຍ ອະຫມັດ, ອັລບັຍຫະກີ, ອັລຫາກິມ)

## 57. ການປະພຶດທີ່ພາໄປສູ່ຄວາມພິນາດ

- ເມື່ອມີການສາບແຊ່ງເຊິ່ງກັນແລະກັນ
- ເມື່ອມີການກິນເຫຼົ້າ ກິນເບຍຫຼວງຫຼາຍ
- ເມື່ອມີການສວມໃສ່ຜ້າໄມ (ໃນໝູ່ຜູ້ຊາຍ)
- ເມື່ອຜູ້ຊາຍພໍໃຈຜູ້ຊາຍດ້ວຍກັນ (ເກ່)
- ເມື່ອຜູ້ຍິງພໍໃຈຜູ້ຍິງດ້ວຍກັນ (ເລສບຽນ)

## 58. ໜ້າທີ່ຜູ້ມີຊີວິດຕໍ່ສົບ (ຄົນຕາຍ)

1. ອາບນ້ຳສົບ
2. ລະຫມາຫໃຫ້ສົບ
3. ຫໍ່ສົບ
4. ຝັງສົບ

## 59. ຄຸນນະລັກສະນະພິເສດຂອງອິສລາມ

1. ເປັນສາສະໜາທີ່ມີພະເຈົ້າ
2. ມີຫຼັກສາສະໜາທີ່ເປັນສາກົນ
3. ເປັນສາສະໜາທີ່ຄວບຄຸມແລະສົມບູນແບບ
4. ເປັນສາສະໜາທີ່ຍືດຍຸ່ນແລະທັນສະໄໝ
5. ເປັນສາສະໜາທີ່ມີຄວາມຍຸດຕິທຳສູງ

## 60. ຄຸນນະລັກສະນະ 10 ປະການທີ່ມຸສລິມຕ້ອງມີ

1. ສັດທາທີ່ແທ້ ບໍ່ສັ່ນທ້ອນ
2. ອິບາດະຫ໌ຖືກຕ້ອງຕາມແບບຢ່າງທ່ານນາບີມຸຮຳຫມັດ
3. ຈິດງາມຈັນຍາມາລະຍາດ
4. ຮອບຮູ້ສະຕິປັນຍາລ່ຳເລີດ
5. ຮັກສາລະບຽບວິໄນ
6. ອາຊີບການງານທີ່ດີ
7. ສຸກພາບແຂ່ງແຮງ
8. ສະນະໃຈໂຕເອງ
9. ເກັ່ງບໍລິຫານເວລາ
10. ສ້າງປະໂຫຍດໃຫ້ແກ່ຜູ້ອື່ນ